ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ



ບົດສະຫຼຸບ
ການເຄື່ອນໄຫວວຽກງານ ປີ 2025 ແລະ ທິດທາງແຜນການ ປີ 2026
ຂອງ ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້

ເມສາ 2026

ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້
ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ
ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້

ນະຄອນຫຼວງວຽງຈັນ, ວັນທີ 03 APR 2026

ບົດສະຫຼຸບ
ການຈັດຕັ້ງປະຕິບັດແຜນການ ປະຈຳປີ 2025 ແລະ ທິດທາງແຜນການ ປະຈຳປີ 2026 ຂອງ ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ສະບັບເລກທີ 1259/ກສ, ລົງວັນທີ 12 ກັນຍາ 2025;
- ອີງຕາມ ແຜນການເຄື່ອນໄຫວວຽກງານຂອງ ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ປະຈຳປີ 2025.

ຫ້ອງການ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ (ກສປ) ສະຫຼຸບການຈັດຕັ້ງປະຕິບັດວຽກງານ ປະຈຳ ປີ 2025 ແລະ ກຳນົດທິດທາງແຜນການ ປະຈຳປີ 2026 ຂອງຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຊຶ່ງໄດ້ແບ່ງອອກເປັນ ສາມພາກດັ່ງລາຍລະອຽດລຸ່ມນີ້:

ພາກທີ I
ສະຫຼຸບການຈັດຕັ້ງປະຕິບັດແຜນການ ປະຈຳປີ 2025

1. ສະພາບລວມ

ພາຍຫຼັງທີ່ມີການປັບປຸງກົງຈັກການຈັດຕັ້ງ ໂດຍການໂຮມສອງກະຊວງເຂົ້າກັນ ຊຶ່ງໃນນີ້ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ກອງທຶນປົກປັກຮັກສາປ່າໄມ້ ກໍໄດ້ໂຮມເຂົ້າກັນຕາມທິດທັນວຽກທີ່ຄ້າຍຄືກັນເຂົ້າກັນ ຕາມແຈ້ງການຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 221/ຄຈສພ, ລົງວັນທີ 13 ມິຖຸນາ 2025 ປ່ຽນຊື່ໃໝ່ ເປັນ ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ມີຊື່ຫຍໍ້ ຫກສປ. ພ້ອມນັ້ນ, ກໍໄດ້ສຸມໃສ່ ປັບປຸງພາລະບົດບາດຄືນໃໝ່ໃຫ້ຖືກຕາມທິດຂອງກະຊວງ ແລະ ສອດຄ່ອງກັບສະພາບການຈັດຕັ້ງປະຕິບັດວຽກຕົວ ຈິງຂອງກອງທຶນ ຊຶ່ງການນຳກະຊວງກະສິກຳ ແລະ ສິ່ງແວດລ້ອມ ໄດ້ເຊັນຮັບຮອງພາລະບົດບາດດັ່ງກ່າວ ໃນວັນທີ 12 ກັນຍາ 2025 ເອກະສານເລກທີ 1259/ກສ. ຫ້ອງການກອງທຶນ ໄດ້ສືບຕໍ່ຈັດຕັ້ງປະຕິບັດຄາດໝາຍສູ້ຊົນ ແລະ ໜ້າວຽກຈຸດສຸມ ທີ່ກຳນົດໄວ້ໃນແຜນການ ປີ 2025 ໂດຍສະເພາະໄດ້ສັງລວມໃຫ້ເຫັນເຖິງຄວາມຄືບ ໜ້າ ການຈັດຕັ້ງປະຕິບັດວຽກງານ ການລະດົມທຶນ, ການສະສົມທຶນ ແລະ ການສະໜອງທຶນ ໃຫ້ບັນດາໂຄງການໃນ ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ເພື່ອປະກອບສ່ວນໃນການຈັດຕັ້ງ ປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ຂອງຂະແໜງກະສິກຳ ແລະ ສິ່ງແວດລ້ອມ ປະຈຳປີ 2025 ຕາມທິດ

ສີຂຽວ ແລະ ຍືນຍົງ. ພ້ອມນັ້ນ ຍັງໄດ້ຕີລາຄາດ້ານດີ, ຂໍ້ຄົງຄ້າງ, ບົດຮຽນທີ່ຖອດຖອນໄດ້ ແລະ ສິ່ງທ້າທາຍຕ່າງໆ ໃນການຈັດຕັ້ງປະຕິບັດຄາດໝາຍ ທີ່ຈະຕ້ອງໄດ້ສູ້ຊົນປະຕິບັດໃຫ້ສຳເລັດໃນສາມເດືອນສຸດທ້າຍ ຂອງປີ 2025 ພ້ອມທັງໄດ້ວາງແຜນການ ປະຈຳປີ 2026 ຂອງຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້.

2. ຄວາມຄືບໜ້າການຈັດຕັ້ງປະຕິບັດຄາດໝາຍສູ້ຊົນ

2.1.ດ້ານການຈັດຕັ້ງ: *ສະຫຼຸບຜົນການຈັດຕັ້ງປະຕິບັດວຽກງານ 5 ປີ (2021-2025) ແລະ ກະກຽມ ທິດທາງແຜນການ 5 ປີ (2026-2030), ກະກຽມແຜນຍຸດທະສາດ 2040 ແລະ ວິໄສທັດ 2045.*

ໄດ້ປັບປຸງຄະນະຮັບຜິດຊອບສະຫຼຸບການຈັດຕັ້ງປະຕິບັດແຜນການ 5 ປີ (2021-2025) ແລະ ທິດທາງແຜນການ 5 ປີ (2026-2030), ການສ້າງແຜນຍຸດທະສາດ 2040 ແລະ ວິໄສທັດຮອດປີ 2045 ຂອງ ຫ້ອງການກອງທຶນ. ພ້ອມນັ້ນ, ກໍໄດ້ສືບຕໍ່ສັງລວມຕີລາຄາຜົນສຳເລັດການຈັດຕັ້ງປະຕິບັດວຽກງານຂອງແຜນການ 5 ປີ (2021-2025), ກຳນົດທິດທາງແຜນການ 5 ປີ (2026-2030) ຂອງຫ້ອງການກອງທຶນ ຊຶ່ງໄດ້ສຳເລັດເປັນຮ່າງເບື້ອງຕົ້ນ. ນອກນັ້ນ, ຍັງໄດ້ປະຕິບັດວຽກງານທີ່ເປັນບຸລິມະສິດຂອງ ຫກປສ ເປັນຕົ້ນ:

1. ປະຊຸມປຶກສາຫາລືຮ່ວມກັບທີມງານກົດໝາຍຂອງ GCF ກ່ຽວກັບການກາຍເປັນກອງທຶນແຫ່ງຊາດ ທີ່ສາມາດເຂົ້າເຖິງແຫຼ່ງທຶນສາກົນໄດ້ໂດຍກົງ ຊຶ່ງກອງປະຊຸມໄດ້ສະເໜີໃຫ້ ກສປ ສົ່ງເອກະສານກ່ຽວກັບການສ້າງຕັ້ງກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ໃຫ້ ພ້ອມທັງຕອບຄຳຖາມອີກຈຳນວນໜຶ່ງ ສົ່ງໃຫ້ GCF;
2. ໄດ້ຮັບຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບປັບປຸງ ດຳລັດກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຈາກກະຊວງ ກະສິກຳ ແລະ ສິ່ງແວດລ້ອມ ໃນວັນທີ 24 ກັນຍາ 2025;
3. ສຳເລັດການປັບປຸງຂໍ້ຕົກລົງ Subsidary Agreement ຕາມຄຳເຫັນຂອງທະນາຄານໂລກ ແລະ ໄດ້ຮັບການລົງນາມຈາກ ກົມຮ່ວມມື ແລະ ການເງິນສາກົນ, ກະຊວງການເງິນ ພ້ອມທັງສົ່ງໃຫ້ທະນາຄານໂລກ ຕາມກຳນົດເວລາ;
4. ສຳເລັດການທົບທວນບັນດາເອກະສານຄູ່ມືຕ່າງໆ ເປັນຕົ້ນ: PPSD, FM Mannual ທີ່ຈະນຳໃຊ້ໃນໂຄງ ການ PWMP ແລະ ໄດ້ນຳສົ່ງໃຫ້ທະນາໂລກຕາມກຳນົດເວລາ;
5. ສຳເລັດການຮຽບຮຽງຄືນບັນດາຄຳສັບ ຂອງຮ່າງຍຸດທະສາດບົດບາດຍິງ-ຊາຍ ສະບັບສຸດທ້າຍ ພ້ອມທັງໄດ້ປັບປຸງເນື້ອໃນໃຫ້ສອດຄ່ອງກັບນິຕິກຳ ແລະ ສະພາບຕົວຈິງ ຊຶ່ງຈະໄດ້ຈັດປະຊຸມເພື່ອເອກະພາບກັນທາງດ້ານເນື້ອໃນຂອງຍຸດທະສາດດັ່ງກ່າວ ກ່ອນນຳສະເໜີສະພາບໍລິຫານ ກປສ ພິຈາລະນາຮັບຮອງ ເພື່ອເປັນເອກະສານອ້າງອີງ ແລະ ອັບໂຫຼດເຂົ້າໃນລະບົບຂອງ GCF ໃນການກາຍເປັນອົງກອນແຫ່ງຊາດທີ່ສາມາດເຂົ້າເຖິງແຫຼ່ງທຶນສາກົນໄດ້ໂດຍກົງ;
6. ປະສານສົມທົບກັບຊ່ຽວຊານ GIZ ໃນການຂຶ້ນແຜນງົບປະມານ ເພື່ອລົງເກັບກຳຂໍ້ມູນ ສະພາບການປ່ຽນແປງດິນຟ້າອາກາດ ແລະ ການປັບໂຕ ໃນຂົງເຂດວຽກງານຄຸ້ມຄອງປ່າສະຫງວນ ຢູ່ 3 ແຂວງ ພາກໃຕ້ (ຈຳປາສັກ, ເຊກອງ ແລະ ອັດຕະປື) ໃນການກະກຽມປົດສະເໜີໂຄງການຂະໜາດນ້ອຍ ເພື່ອນຳສະເໜີຂໍທຶນຈາກ GCF ໄດ້ຕາມທີ່ຜູ້ໃຫ້ທຶນກຳນົດ.

2.2.ດ້ານການຄຸ້ມຄອງ-ບໍລິຫານ: *ປະເມີນຜົນການຈັດຕັ້ງປະຕິບັດແຜນການ 5 ປີ (2021-2025) ແລະ ຄູ່ມືຄຸ້ມຄອງບໍລິຫານ ຂອງ ກປສ ໂດຍມີການຕິດຕາມກວດກາ ການຈັດຕັ້ງປະຕິບັດເປັນແຕ່ລະໄລຍະ*

ໄດ້ດຳເນີນການກວດຄືນການຈັດຕັ້ງປະຕິບັດແຜນການ 5 ປີ (2021-2025) ໂດຍສະເພາະຜົນສຳເລັດຂອງບັນດາຄາດໝາຍ ເພື່ອປະເມີນປະສິດທິຜົນຂອງຄາດໝາຍທີ່ໄດ້ກຳນົດໄວ້ໃນແຜນການ ພ້ອມທັງໄດ້ກະກຽມປະເມີນບັນດາຄູ່ມືຄຸ້ມຄອງບໍລິຫານ ຂອງ ກປສ ຊຶ່ງໄດ້ສັງລວມຂໍ້ມູນຜົນການຈັດ

ຕັ້ງປະຕິບັດຄູ່ມືຕ່າງໆ ທີ່ໄດ້ຝຶກອົບຮົມໃຫ້ໂຄງການທີ່ໄດ້ຮັບທຶນຈາກ ກປສ. ນອກນັ້ນ, ຍັງໄດ້ປະຕິບັດວຽກງານທີ່ເປັນບຸລິມະສິດຂອງຫ້ອງການກອງທຶນ ເປັນຕົ້ນ:

1. ຈັດກອງປະຊຸມສະພາບໍລິຫານ ກປສ ສະໄໝສາມັນ ຄັ້ງທີ 13 ເພື່ອຮັບຮອງປົດສະຫຼຸບການ ເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການ ປີ 2025 ຂອງ ຫກປສ; ຮັບຮອງ 9 ໂຄງການ ທີ່ຂໍນຳໃຊ້ທຶນພາຍໃນຂອງກອງທຶນ; ຮັບຮອງການເພີ່ມຕົ້ນທຶນເງິນຝາກເພື່ອສະສົມເພີ່ມລາຍຮັບໃນບ້ວງລາຍຮັບຂອງກອງທຶນ ແລະ ບ້ວງຕິດຕາມກວດກາ ຊສ 30% ຂອງລາຍຮັບ. ພ້ອມນັ້ນ, ຍັງໄດ້ຈັດພິທີເຊັນສັນຍາສະໜອງທຶນ ໃຫ້ 9 ໂຄງການ ທີ່ຂໍນຳໃຊ້ທຶນພາຍໃນ;
2. ຈັດກອງປະຊຸມທົບທົບທວນການຈັດຕັ້ງປະຕິບັດວຽກງານບັງຄັບໃຊ້ກົດໝາຍສັດນ້ຳ, ສັດປ່າ ແລະ ປ່າໄມ້ (ອົງປະກອບຍ່ອຍ 3.2), ວຽກງານການເງິນ ປະຈຳໄຕມາດ 1 ແລະ 2 ປີ 2025, ວາງແຜນວຽກ ແລະ ແຜນງົບປະມານ ປະຈຳປີ 2026 ຂອງໂຄງການ LLL;
3. ຈັດກອງປະຊຸມປຶກສາຫາລື ກ່ຽວກັບການຄຸ້ມຄອງວຽກງານການເງິນ ແລະ ກົນໄກການຄຸ້ມຄອງທຶນ ແລະ ສະໜອງທຶນ ຂອງຫ້ອງການກອງທຶນ ຮ່ວມກັບ ຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ;
4. ລົງກວດກາຫຼັງຈ່າຍ ແລະ ຕິດຕາມ, ຊຸກຍູ້ວຽກຄຸ້ມຄອງໂຄງການ 2 ຄັ້ງຄື: ຄັ້ງທີ 1 ປະຕິບັດແຜນ 6 ເດືອນທ້າຍປີ 2024 ຈຳນວນ 10 ແຂວງ (ຈຳປາສັກ, ອັດຕະປື, ສາລະວັນ, ສະຫວັນນະເຂດ, ຄຳມ່ວນ, ບໍລິຄຳໄຊ, ຫຼວງນ້ຳທາ, ຫຼວງພະບາງ, ໄຊຍະບຸລີ ແລະ ຊຽງຂວາງ); ຄັ້ງທີ 2 ປະຕິບັດແຜນ 6 ເດືອນຕົ້ນປີ 2025 ຈຳນວນ 5 ແຂວງ (ຈຳປາສັກ, ອັດຕະປື, ສາລະວັນ, ສະຫວັນນະເຂດ ແລະ ຄຳມ່ວນ);
5. ລົງຕິດຕາມການນຳໃຊ້ງົບປະມານ ຕິດຕາມກວດກາວິຊາການດ້ານສິ່ງແວດລ້ອມ ແລະ ການຄຸ້ມຄອງອ່າງຮັບນ້ຳ 2 ຄັ້ງຄື: ຄັ້ງທີ 1 ປະຕິບັດແຜນ 6 ເດືອນທ້າຍປີ 2024 ຊຶ່ງໄດ້ຈັດຝຶກອົບຮົມ ກ່ຽວກັບການປະກອບເອກະສານຂໍເບີກຈ່າຍງົບປະມານ ແລະ ການປະກອບເອກະສານສະຫຼຸບລາຍຈ່າຍ ໃຫ້ 7 ແຂວງ (ລວມທັງບັນດາເມືອງທີ່ຂຶ້ນກັບແຂວງດັ່ງກ່າວ) ຄື: ໄຊຍະບຸລີ, ຫຼວງພະບາງ, ຊຽງຂວາງ, ຫົວພັນ, ນະຄອນຫຼວງວຽງຈັນ, ໄຊສົມບຸນ ແລະ ວຽງຈັນ; ຄັ້ງທີ 2 ລົງຕິດຕາມປົດສະຫຼຸບວຽກງານວິຊາການ ປີ 2023 ຈຳນວນ 4 ແຂວງຄື: ອຸດົມໄຊ, ຜົ້ງສາລີ, ຫຼວງນ້ຳທາ ແລະ ບໍ່ແກ້ວ. ພ້ອມທັງ ລົງຕິດຕາມ ແລະ ຊຸກຍູ້ວຽກງານການເງິນ ແລະ ການສະໜັບສະໜຸນດ້ານວິຊາການ ໃຫ້ໂຄງການຍ່ອຍ ທີ່ໄດ້ຮັບທຶນຈາກໂຄງການ LLL ຢູ່ແຂວງ ຫົວພັນ, ບໍລິຄຳໄຊ, ຄຳມ່ວນ ແລະ ສະຫວັນນະເຂດ;
6. ຈັດຝຶກອົບຮົມ 3 ຄັ້ງຄື: ຄັ້ງທີ 1 ຝຶກອົບຮົມກ່ຽວກັບການຄຸ້ມຄອງການເງິນ ແລະ ຈັດຊື້-ຈັດຈ້າງ ໃຫ້ໂຄງການ SU-I-GFLM (ໂຄງການຍ່ອຍ) ຈຳນວນ 43 ໂຄງການ ໃຫ້ 6 ແຂວງຄື: ແຂວງ ຫົວພັນ, ຫຼວງພະບາງ, ໄຊຍະບຸລີ, ບໍ່ແກ້ວ, ຫຼວງນ້ຳທາ ແລະ ແຂວງ ອຸດົມໄຊ; ຄັ້ງທີ 2 ຝຶກອົບຮົມຄູ່ມືຄຸ້ມຄອງໂຄງການ ໂດຍສະເພາະຂັ້ນຕອນການຂຶ້ນແຜນງົບປະມານ (ທຶນພາຍໃນ) ເພື່ອຂໍເບີກຈ່າຍງົບປະມານ ປີ 2025 ແລະ ການປະກອບເອກະສານສະຫຼຸບລາຍຈ່າຍ ໃຫ້ 4 ແຂວງ ຄື: ໄຊຍະບຸລີ, ຫຼວງພະບາງ, ຊຽງຂວາງ ແລະ ແຂວງຫົວພັນ (ລວມທັງບັນດາເມືອງທີ່ຂຶ້ນກັບແຂວງດັ່ງກ່າວ) ແລະ ຄັ້ງທີ 3 ຝຶກອົບຮົມຄູ່ມືຄຸ້ມຄອງໂຄງການ ປະຈຳປີ ໃຫ້ໂຄງການຍ່ອຍທີ່ໄດ້ຮັບທຶນ ຈາກ ກປສ ຈຳນວນ 13 ໂຄງການໃນຂອບເຂດທົ່ວປະເທດ ພ້ອມທັງໄດ້ມອບໃບຢັ້ງຢືນໃຫ້ແກ່ຜູ້ເຂົ້າຮ່ວມທັງໝົດ ຈຳນວນ 65 ທ່ານ, ຍິງ 24 ທ່ານ;
7. ອອກແຈ້ງການ ກ່ຽວກັບການນຳໃຊ້ການປະທັບໃໝ່ ຂອງຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ພ້ອມທັງນຳສົ່ງໃຫ້ບັນດາໂຄງການຍ່ອຍທຶນພາຍໃນ ແລະ ທຶນສາກົນ ແລະ ພາກສ່ວນຕ່າງໆຮັບຊາບ;

8. ສຳເລັດປິດປະເມີນປິດໂຄງການ ປີ 2023 ຈຳນວນ 8 ໂຄງການ, ປິດປະເມີນໂຄງການ ປີ 2024 ຈຳນວນ 36 ໂຄງການ ແລະ ປິດປະເມີນປິດໂຄງການ ປີ 2024 ຈຳນວນ 5 ໂຄງການ;
9. ໄດ້ອອກໜັງສືແຈ້ງຕອບເຖິງ ເຈົ້າຂອງປິດເໜີໂຄງການ ທີ່ບໍ່ໄດ້ຮັບການພິຈາລະນາໃນການຂໍນຳໃຊ້ ທຶນພາຍໃນປະຈຳປີ 2024 ທັງໝົດ 16 ພາກສ່ວນ 19 ໂຄງການ;
10. ສຳເລັດສະຫຼຸບການຈັດຕັ້ງປະຕິບັດຂໍ້ແຂ່ງຂັນຮັກຊາດ ແລະ ພັດທະນາ 5 ປີ 2021-2025 ແລະ ທິດທາງແຜນການ 5 ປີ 2026-2030 ຂອງຫ້ອງການກອງທຶນ. ພ້ອມນັ້ນ, ໄດ້ສັງລວມການຍ້ອງຍໍຜົນງານ 5 ປີ 2021-2025 ຂອງພະນັກງານ ຫ້ອງການກອງທຶນ ສົ່ງກົມຈັດຕັ້ງ ແລະ ພະນັກງານ, ກະຊວງກະສິ ກຳ ແລະ ສິ່ງແວດລ້ອມ;
11. ໄດ້ອອກໜັງສືສະເໜີຂໍລາຍຊື່ພະນັກງານຂັ້ນກົມ ເພື່ອປະກອບເຂົ້າໃນຄະນະກຳມະການຄຸ້ມຄອງໂຄງການ (MTC) ສຳລັບອົງປະກອບ 1 ໂຄງການຄຸ້ມຄອງມົນລະພິດ ແລະ ສິ່ງເສດເຫຼືອ ຢຸ ສປປ ລາວ (PWMP).

2.3.ດ້ານບຸກຄະລາກອນ: ***ປະເມີນການຈັດຕັ້ງປະຕິບັດແຜນກຳນົດຕຳແໜ່ງງານ ໂດຍອີງຕາມຜົນການປະເມີນຄວາມຕ້ອງການຂອງພະນັກງານ; ປະເມີນການນຳໃຊ້ຕົວຊີ້ວັດ ໃນການປະເມີນຜົນງານພະນັກງານ ແລະ ກຳນົດຕົວຊີ້ວັດ ສຳລັບແຜນ 5 ປີຕໍ່ໜ້າ; ປະເມີນການ ຈັດຕັ້ງປະຕິບັດແຜນພັດທະນາບຸກຄະລາກອນ ອີງຕາມຄາດໝາຍທີ່ກຳນົດໄວ້ ແລະ ກະ ກຽມແຜນພັດທະນາບຸກຄະລາກອນສຳລັບ ແຜນການ 5 ປີ ຕໍ່ໜ້າ***

ສຳເລັດໂດຍພື້ນຖານໃນການ ກຳນົດຕຳແໜ່ງງານ ຕາມພາລະບົດບາດໃໝ່ ຂອງ ຫ້ອງການກອງທຶນ, ສຳເລັດການສ້າງແຜນພັດທະນາບຸກຄະນະລາກອນ ປະຈຳປີ 2025 ໃນຮູບແບບ (ຝຶກອົບຮົມໄລຍະສັ້ນ) ໃຫ້ພະນັກງານ ທຶນພາຍໃນ ແລະ ທຶນສາກົນ. ພ້ອມນີ້, ຍັງໄດ້ປະກອບພະນັກງານເຂົ້າໃນຕຳແໜ່ງທີ່ຍັງວ່າງ ທຶນພາຍໃນ ແລະ ທຶນສາກົນ 4 ຕຳແໜ່ງ ລວມ 7 ທ່ານ ຄື: ທຶນພາຍໃນ 2 ຕຳແໜ່ງ (ຜູ້ຊ່ວຍວຽກບໍລິຫານ ແລະ ຂັບລົດ), ທຶນສາກົນ 2 ຕຳແໜ່ງ (ຜູ້ຊ່ວຍບັນຊີ 4 ອັດຕາ ໂຄງການ SU-IGFLM ແລະ ຜູ້ປະສານງານໂຄງການຂັ້ນແຂວງ ໂຄງການ Ebs) ແລະ ໄດ້ສຳເລັດການປະເມີນຜົນການຈັດຕັ້ງປະຕິບັດວຽກງານພະນັກງານ ຈຳນວນ 6 ທ່ານ ຄື: ຜູ້ຊ່ວຍວຽກບໍລິຫານ, ຂັບລົດ (ທຶນພາຍໃນ), ຜູ້ຊ່ວຍບັນຊີ 4 ທ່ານ ໂຄງການ SU-I-GFLM (ທຶນສາກົນ). ນອກນັ້ນ, ຍັງໄດ້ປະຕິບັດວຽກງານທີ່ເປັນບຸລິມະສິດຂອງຫ້ອງການກອງທຶນ ເປັນຕົ້ນ:

1. ອອກຂໍ້ຕົກລົງວ່າດ້ວຍການຢຸດສັນຍາການເຮັດວຽກ ຂອງພະນັກງານ ຈຳນວນ 6 ທ່ານ (ທຶນພາຍໃນ 4 ທ່ານ, ຍິງ 3 ທ່ານ ແລະ ທຶນສາກົນ 2 ທ່ານ ຍິງ);
2. ໄດ້ຈັດຝຶກອົບຮົມໃຫ້ພະນັກງານທຶນພາຍໃນ ແລະ ທຶນສາກົນ 2 ຄັ້ງ ຄື: ຄັ້ງທີ 1 ຝຶກອົບຮົມ ກ່ຽວກັບລະບົບການຄຸ້ມຄອງ ໂປແກມບັນຊີ ACCPAC ໃຫ້ພະນັກງານທີ່ຮັບຜິດຊອບການເງິນ-ການບັນຊີ ຈຳນວນ 17 ທ່ານ, ຍິງ 10 ທ່ານ ແລະ ຄັ້ງທີ 2 ຝຶກອົບຮົມ ກ່ຽວກັບຫຼັກສູດການນຳໃຊ້ Microsoft Excel ຂັ້ນສູງ ແລະ ການນຳໃຊ້ Functions ຕ່າງໆ ມີພະນັກງານເຂົ້າຮ່ວມ 27 ທ່ານ, ຍິງ 15 ທ່ານ ຊຶ່ງພະນັກງານທີ່ເຂົ້າຮ່ວມຝຶກອົບຮົມ ແມ່ນໄດ້ຮັບຢັ້ງຢືນໃນແຕ່ລະຫຼັກສູດ;
3. ໄດ້ຈັດຝຶກອົບຮົມໃຫ້ບັນດາໂຄງການຍ່ອຍ ທຶນພາຍໃນ ແລະ ທຶນສາກົນ ຈຳນວນ 3 ຄັ້ງຄື: ຄັ້ງທີ 1 ຝຶກອົບຮົມ ກ່ຽວກັບການຄຸ້ມຄອງການເງິນ ແລະ ຈັດຊື້-ຈັດຈ້າງ ໃຫ້ໂຄງການທີ່ໄດ້ຮັບທຶນຈາກໂຄງການ SU-I-GFLM ຈຳນວນ 43 ໂຄງການ ໃນ 6 ແຂວງຄືເປົ້າໝາຍຄື (ຫົວພັນ, ຫຼວງພະບາງ, ໄຊຍະບຸລີ, ບໍ່ແກ້ວ, ຫຼວງນ້ຳທາ ແລະ ອຸດົມໄຊ); ຄັ້ງທີ 2 ຝຶກອົບຮົມຄູ່ມືຄຸ້ມຄອງໂຄງການ ໂດຍສະເພາະຂັ້ນຕອນການຂຶ້ນແຜນງົບປະມານ (ທຶນພາຍໃນ) ເພື່ອຂໍເບີກຈ່າຍ ງົບປະມານ ປີ 2025 ແລະ ການປະກອບເອກະສານສະຫຼຸບລາຍຈ່າຍ ໃຫ້ 4 ແຂວງ ຄື (ໄຊຍະບຸລີ, ຫຼວງພະບາງ, ຊຽງຂວາງ ແລະ ຫົວພັນ) ລວມທັງບັນດາເມືອງທີ່ຂຶ້ນກັບແຂວງດັ່ງກ່າວ ແລະ ຄັ້ງທີ 3 ຝຶກອົບຮົມຄູ່ມືຄຸ້ມຄອງໂຄງການ ປະຈຳປີ ໃຫ້ໂຄງການຍ່ອຍທີ່ໄດ້ຮັບທຶນ ຈາກ ກອງທຶນ ຈຳນວນ 13 ໂຄງການໃນຂອບ

ເຂດທົ່ວປະເທດ ພ້ອມທັງໄດ້ມອບໃບຢັ້ງຢືນໃຫ້ແກ່ຜູ້ເຂົ້າຮ່ວມທັງໝົດ ຈຳນວນ 65 ທ່ານ, ຍິງ 24 ທ່ານ. ນອກນັ້ນ, ຍັງໄດ້ສົ່ງພະນັກງານເຂົ້າຝຶກອົບຮົມວຽກງານຄຸ້ມຄອງບໍລິຫານໂຄງການ ແລະ ຄຸ້ມຄອງການເງິນ ແລະ ການຈັດຊື້ຈັດຈ້າງທີ່ທະນາຄານໂລກເປັນຜູ້ຈັດ ຈຳນວນ 5 ທ່ານ.

2.4.ດ້ານການລະດົມທຶນ: ***ຫກປສ ຈະສຸມໃສ່ເກັບລາຍຮັບໃຫ້ບັນລຸມູນຄ່າ ທັງໝົດປະມານ 11.70 ລ້ານໂດລາ ສຫລ ໂດຍຄາດຄະເນລາຍຮັບຈາກທຶນພາຍໃນ ຈຳນວນ 3.05 ລ້ານໂດລາ ສຫລ (ດອກເບ້ຍຕົ້ນທຶນເງິນຝາກປະຈຳ ປະມານ 0.58 ລ້ານໂດລາ ສຫລ, ຕົ້ນທຶນເງິນກູ້ ແລະ ດອກເບ້ຍເງິນກູ້ ປະມານ 0.04 ລ້ານໂດລາ ສຫລ, ລາຍຮັບຈາກທຶນປະກອບສ່ວນປະຕິບັດພັນທະ ຂອງໂຄງການລົງທຶນພັດທະນາໄຟຟ້າ ແລະ ບໍ່ແຮ່ ປະມານ 2.43 ລ້ານໂດລາ ສຫລ) ແລະ ລາຍຮັບຈາກທຶນສາກົນ 8.65 ລ້ານໂດລາ ສຫລ ຄາດຄະເນຈະໄດ້ຮັບຈາກໂຄງການ (LLL, I-GFLL, SU-I-GFLM, UNEP ແລະ PWMP). ນອກນັ້ນ, ຍັງມີງົບຄຸ້ມຄອງງົບປະມານຕິດຕາມກວດກາວິຊາການ ດ້ານສິ່ງແວດລ້ອມ ແລະ ການຄຸ້ມຄອງອ່າງຮັບນ້ຳ 4.07 ລ້ານໂດລາ ສຫລ. ພ້ອມນັ້ນ, ຍັງຈະໄດ້ປະເມີນການຈັດຕັ້ງປະຕິບັດແຜນການເກັບລາຍຮັບ ແລະ ການລະດົມທຶນ (2021-2025) ແລະ ນິຕິກຳໃນການເຂົ້າຫາແຫຼ່ງທຶນ ໃໝ່ຕາມດຳລັດ ຂອງ ກປສ; ສ້າງແຜນການເກັບລາຍຮັບ ແລະ ການລະດົມທຶນ (2026- 2030)***

ໃນປີ 2025 ມີລາຍຮັບຈາກກອງທຶນປົກປັກຮັກສາສິ່ງແວດລ້ອມ ຈຳນວນ 14 ລ້ານໂດລາ ສຫລ ເທົ່າກັບ 120% ທຽບໃສ່ແຜນການປະຈຳປີ 2025ຈຳນວນ 11.7 ລ້ານໂດລາ ສຫລ (ເປັນທຶນພາຍໃນ 3 ລ້ານໂດລາ ສຫລ ແລະ ທຶນສາກົນ ຈຳນວນ 11 ລ້ານໂດລາ ສຫລ ດັ່ງລາຍລະອຽດລຸ່ມນີ້:

- ທຶນພາຍໃນ ປະຕິບັດໄດ້ 64.6 ຕື້ກີບ ຫຼື ທຽບເທົ່າ 3.01 ລ້ານໂດລາ ສຫລ ເທົ່າກັບ 98 % ທຽບໃສ່ແຜນປີ 3.06 ລ້ານໂດລາ ສຫລ ຊຶ່ງເກັບໄດ້ຈາກແຫຼ່ງລາຍຮັບທີ່ຕ່າງໆ (ລະອຽດລະບຸໃນຕາຕະລາງທີ 1)

– ລາຍຮັບຈາກຕົ້ນທຶນເງິນຝາກປະຈຳ 10.92 ລ້ານໂດລາ ສຫລ ສາມາດເກັບລາຍຮັບດອກເບ້ຍໄດ້ 579,000 ໂດລາ ສຫລ ເທົ່າກັບ 103 % ຂອງແຜນປີ 598,096 ໂດລາ ສຫລ ;

– ລາຍຮັບຈາກໂຄງການເງິນກູ້ (ຕົ້ນທຶນ ແລະ ດອກເບ້ຍ) ສາມາດເກັບໄດ້ຄືນ 7,730 ໂດລາສະຫະລັດ ເທົ່າກັບ 17% ຂອງແຜນປີ 40,054 ໂດລາສະຫະລັດ;

– ລາຍຮັບຈາກການປະກອບສ່ວນພັນທະດ້ານສິ່ງແວດລ້ອມຈາກໂຄງການລົງທຶນດ້ານໄຟຟ້າ ແລະ ບໍ່ແຮ່ ແລະ ອື່ນໆ ສາມາດເກັບໄດ້ 2.39 ລ້ານໂດລາ ສຫລ ເທົ່າກັບ 98% ຂອງແຜນປີ 2.43 ລ້ານໂດລາ ສະຫະລັດ;

– ລາຍຮັບຈາກຄ່າປັບໄໝ ແລະ ຄ່າທົດແທນຄວາມເສຍຫາຍຕໍ່ສິ່ງແວດລ້ອມ (ລາຍຮັບທີ່ເກີດຂຶ້ນໃໝ່) ສາມາດເກັບໄດ້ 8,983ໂດລາ ສຫລ (ເປັນແຫຼ່ງລາຍຮັບໃຫມ່).

- ທຶນສາກົນ ປະຕິບັດໄດ້ 11 ລ້ານໂດລາ ສຫລ ເທົ່າກັບ 120 % ທຽບໃສ່ແຜນປີ 8.64 ລ້ານໂດລາ ສຫລ ໄດ້ຮັບຈາກການບໍລິການດ້ານການເງິນ (ຄ່ຽນເງິນ) ຂອງໂຄງການສາກົນ (ລະອຽດລະບຸໃນຕາຕະລາງທີ 2)

– ໂຄງການຄຸ້ມຄອງໂຄງການພູມີທັດ ແລະ ປັບປຸງຊີວິດການເປັນຢູ່ (LLL) ສາມາດຄ່ຽນໄດ້ 1.12 ລ້ານໂດລາ ສຫລ ເທົ່າ 99% ຂອງແຜນປີ 1.13 ລ້ານໂດລາ ສຫລ ;

- ໂຄງການຈັດຕັ້ງປະຕິບັດສ້າງຄວາມເຂັ້ມແຂງວຽກງານປ່າໄມ້, ປັບປຸງປ່າໄມ້ແບບພູມມິທັດ ແລະ ສິ່ງເສີມຊີວິດການເປັນຢູ່ (I-GFLL) ສາມາດຄ່ຽນໄດ້ 1.93ລ້ານໂດລາ ສຫລ ທຽບເທົ່າ 106% ທຽບໃສ່ແຜນປີ 1.83 ລ້ານໂດລາ ສຫລ;
- ໂຄງການຜັນຂະຫຍາຍການຈັດຕັ້ງປະຕິບັດ ການຫຼຸດຜ່ອນທາດອາຍເຮືອນແກ້ວ ໂດຍປັບປຸງການຄຸ້ມຄອງບໍລິຫານພູມິທັດປ່າໄມ້ແບບຍືນຍົງ (SU-I-GFLM) ສາມາດຄ່ຽນໄດ້ 5.2 ລ້ານໂດລາ ສຫລ ທຽບເທົ່າ 228% ທຽບໃສ່ແຜນປີ 2.3 ລ້ານໂດລາ ສຫລ;
- ໂຄງການສ້າງຄວາມທົນທານຂອງປະ ຊາກອນໃນຕົວເມືອງ ເພື່ອປັບຕົວເຂົ້າກັບການປ່ຽນແປງດິນຟ້າ ອາກາດ ໂດຍການຄຸ້ມຄອງ ແລະ ນຳໃຊ້ທ່າ ແຮງຂອງລະບົບນິເວດ ຢູ່ ສປປ ລາວ (Urban EbS Project) ສາມາດຄ່ຽນໄດ້ 2.8 ລ້ານໂດລາ ສຫລ ທຽບເທົ່າ 100% ທຽບໃສ່ແຜນປີ 2.8 ລ້ານໂດລາ ສຫລ.

ພ້ອມກັນນີ້ນ, ຍັງສາມາດປະຕິບັດເກັບລາຍຮັບ ງົບປະມານຕິດຕາມກວດກາສິ່ງແວດລ້ອມ ແລະ ງົບປະມານ ຄຸ້ມຄອງອ່າງຮັບຮັບນ້ຳ ຈາກບັນດາໂຄງການລົງທຶນ ແລະ ກິດຈະການຕ່າງໆ ໄດ້ທັງໝົດ 49.22 ຕື້ ກີບ ຫຼື ທຽບເທົ່າ 2.16 ລ້ານໂດລາ ສຫລ ເທົ່າກັບ 52% ທຽບໃສ່ແຜນປີ 4.07 ລ້ານໂດລາ ສຫລ (ລະອຽດ ລະບຸໃນຕາຕະລາງທີ 2)

- ລາຍຮັບຈາກກອງທຶນປົກປັກຮັກສາປ່າໄມ້ ເກັບໄດ້ຈາກແຫຼ່ງລາຍຮັບຈາກບັນດາແຂວງໃນຂອບເຂດທົ່ວ ປະເທດ ສາມາດເກັບໄດ້ທັງໝົດ ຈຳນວນ 10.82 ຕື້ກີບ ເທົ່າກັບ 153% ຂອງແຜນການປະຈຳປີ 2025 (7.08 ຕື້ກີບ) ເຫັນວ່າເກັບໄດ້ລື່ນແຜນ 53% ລາຍລະອຽດລະບຸໃນຕາຕະລາງທີ 2

  - ໄດ້ຮັບຈາກເຄື່ອງປ່າຂອງດົງ 3.69 ຕື້ກີບ;
  - ໄດ້ຮັບຈາກພັນທະປູກໄມ້ 0.65 ຕື້ກີບ;
  - ໄດ້ຮັບຈາກຄ່າປູກປ່າທົດແທນ 0.61 ຕື້ກີບ;
  - ໄດ້ຮັບຈາກ ການຂາຍໄມ້ ແລະ ເຄື່ອງປ່າຂອງດົງທີ່ຮິບເປັນຂອງລັດ 0.03 ຕື້ກີບ;
  - ໄດ້ຮັບຈາກ ຄ່າທຳນຽມຫັນປ່ຽນທີ່ດິນປ່າໄມ້ 5.84 ຕື້ກີບ.

- ລາຍຮັບຈາກໂຄງການລົງທຶນ (ພະລັງງານ ແລະ ບໍ່ແຮ່) ຕາມມະຕິສະພາແຫ່ງຊາດ ທີ່ມອບພັນທະ ຮັບຜິດຊອບ ປູກປ່າທົດແທນ, ຟື້ນຟູປ່າ, ຈ່າຍຄ່າບໍລິການວິຊາການ, ຄ່າບໍລິການລະບົບນິເວດ, ຄ່າບໍລິການ ລະບົບນິເວດປ່າໄມ້, ຄ່າທົດແທນຊີວະນາໆພັນ, ຄ່າປັບໜ້າດິນຄືນ ທີ່ໄດ້ຫັນປ່ຽນທີ່ດິນປ່າໄມ້ເປັນ ອ່າງເກັບນ້ຳ ແລະ ເຂດຂຸດຄົ້ນບໍ່ແຮ່ ສາມາດເກັບໄດ້ເງິນກີບ ຈຳນວນ 27.4 ຕື້ກີບ ແລະ ເກັບເປັນເງິນ ໂດ ລາ ສຫລ 252,093 ໂດລາ ສຫລ ລາຍລະອຽດລະບຸໃນຕາຕະລາງທີ 3.

ນອກນີ້, ຫ້ອງການກອງທຶນ ຍັງໄດ້ສືບຕໍ່ຈັດຕັ້ງປະຕິບັດບັນດາໜ້າວຽກຈຸດສຸມຕ່າງໆ ຕາມແຜນການ ທີ່ກຳນົດໄວ້ ດັ່ງນີ້:

1. ກອງປະຊຸມສະພາບໍລິຫານກອງທຶນ ສະໄໝສາມັນ ຄັ້ງທີ XIII ເຫັນດີໃຫ້ຈັດສັນບ້ວງການປະກອບ ສ່ວນຕາມພັນທະສັນຍາສຳປະທານ ຂອງໂຄງການລົງທຶນຈຳນວນ 1.42 ລ້ານໂດລາ ສຫລ ແລະ ງົບ ຄຸ້ມຄອງງົບ ປະມານຕິດຕາມກວດກາວິຊາການ ດ້ານສິ່ງແວດລ້ອມ ແລະ ການຄຸ້ມຄອງອ່າງຮັບນ້ຳ ຈຳນວນ 1.5 ລ້ານ ໂດລາ ສຫລ ລວມ 2.92 ລ້ານ ສຫລ ເພື່ອເພີ່ມເຂົ້າໃສ່ໃນຕົ້ນທຶນເງິນຝາກ.

ພ້ອມນີ້, ກະຊວງການເງິນ ໄດ້ເຫັນດີໃຫ້ ຫ້ອງການກອງທຶນ ດຳເນີນເອກະສານ ໃນການເພີ່ມຕົ້ນທຶນ ເງິນຝາກ ທີ່ທະນາຄານພັດທະ ນາລາວ ຕາມການສະເໜີ;

2. ຕິດຕາມ ແລະ ຊຸກຍູ້ການຊຳລະຕົ້ນທຶນ ແລະ ດອກເບ້ຍໂຄງການເງິນກູ້ ຈຳນວນ 10 ສັນຍາ ຊຶ່ງໄດ້ ສຳເລັດການປິດໂຄງການສັນຍາເງິນກູ້ 2 ສັນຍາຄື: 1) ໂຄງການບຳບັດສິ່ງເສດເຫຼືອສ່ວນບຸກຄົນ ບ້ານ ຊາງ, ເມືອງນ້ຳບາກ, ແຂວງ ຫຼວງພະບາງ ແລະ 2) ໂຄງການຄຸ້ມຄອງຂີ້ເຫຍື້ອ ບ້ານກົກຂາມ ເມືອງ ວຽງທອງ ທ່ານ ຈີໄກຢາງ ພ້ອມທັງໄດ້ມອບໃບຕາດິນທີ່ເອົາມາຄ້ຳປະກັນຄືນໃຫ້ເຈົ້າຂອງ. ພ້ອມນີ້, ໄດ້ຕິດຕາມ ໜັງສືແຈ້ງ ຈຳນວນ 08 ໂຄງການ ທີ່ຍັງຄ້າງຊຳລະ, ປະສານສົມທົບກັບພາກສ່ວນ ກ່ຽວຂ້ອງ ໃນການຕິດຕາມຄວາມຄືບໜ້າການປະຕິບັດຄຳຕັດສິນຂອງສານແຂວງ ຕໍ່ສັນຍາ 2 ສະບັບ ຂອງ ທ່ານ ດາວເພັດ ອຸດຕະວົງ ແລະ ການປະກາດຂາຍຫຼັກຊັບຄ້ຳ ປະກັນເອງຕາມບົດບັນທຶກ 2 ສະບັບ ຂອງ ທ່ານ ວິລັດ ລາວັນພອນ;
3. ປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ໃນການເກັບຂໍ້ມູນເພີ່ມເຕີມ ເພື່ອເກັບລາຍຮັບຈາກການ ປະກອບຜົນທະດ້ານສິ່ງແວດລ້ອມ ຈາກໂຄງການພັດທະນາຂອງ ຂະແໜງ ໄຟຟ້າ, ບໍ່ແຮ່, ກະສິກຳ ແລະ ອຸດສາຫະກຳ ໃຫ້ໄດ້ຕາມແຜນການ ໂດຍໄດ້ປະສານສົມທົບກັບ 3 ພາກສ່ວນຄື:
   - ປະສານງານກັບ ກົມຄຸ້ມຄອງບໍ່ແຮ່, ກົມທໍລະນີສາດ ແລະ ແຮ່ທາດ ແລະ ກົມແຜນການ ແລະ ການ ຮ່ວມມື, ກະຊວງ ອຸດສາຫະກຳ ແລະ ການຄ້າ ເພື່ອຂໍ້ມູນເພີ່ມຕື່ມ ກ່ຽວກັບໂຄງການລົງທຶນດ້ານ ແຮ່ທາດ ໂດຍສະເພາະແມ່ນ: ຊື່ບໍລິສັດ, ຊື່ໂຄງການ, ໄລຍະເລີ່ມ-ສິ້ນສຸດ ເຊັນສັນຍາສຳປະ ທານ, ສະຖານະພາບໂຄງການປະຈຸບັນ ແລະ ພັນທະດ້ານສິ່ງແວດລ້ອມ ຕໍ່ປີ ຂອງໂຄງການລົງທຶນດ້ານແຮ່ ທາດ ທີ່ເຄີຍມີການປະກອບສ່ວນພັດທະນາດ້ານສິ່ງແວດລ້ອມ ໃຫ້ແກ່ກອງທຶນ ແຕ່ປີ 2020-2024 ຊຶ່ງໄດ້ຮັບໜັງສືແຈ້ງຕອບຈາກ ກົມແຜນການ ແລະ ການຮ່ວມມື ສ່ວນກົມຄຸ້ມຄອງບໍ່ແຮ່, ກົມ ທໍລະນີສາດ ແລະ ແຮ່ທາດ ຍັງບໍ່ມີຄຳເຫັນ;
   - ຕິດຕາມຄຳເຫັນຂອງ ກົມແຜນການ ແລະ ການຮ່ວມມື ແລະ ກົມທຸລະກິດພະລັງງານ ກະຊວງກະ ຊວງ ອຸດສາຫະກຳ ແລະ ການຄ້າ ໃນການພິຈາລະນາຄົ້ນຄວ້າ ເພື່ອດຳເນີນການແຈ້ງເສຍຄ່າພັນທະ ຕາມສັນຍາສຳປະທານ ຂອງໂຄງການລົງທຶນດ້ານພະລັງງານ ທີ່ຍັງຄ້າງຊຳລະຕາມສັນຍາສຳປະທານ ໃຫ້ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຮອດທ້າຍປີ 2024 ໂດຍອີງຕາມຂໍ້ມູນ ສະຖິຕິໂຄງການ ປີ 2020 ມີໂຄງການລົງທຶນໄຟຟ້າ 16 ໂຄງການ ຊຶ່ງໃນ 12 ໂຄງການ ມີຍອດ ລວມຄ້າງຊຳລະຕາມພັນທະຮອດທ້າຍປີ 2024 ທັງໝົດ 1.42 ລ້ານໂດລາ ສຫລ;
   - ຕິດຕາມຄຳເຫັນຂອງ ກົມຄຸ້ມຄອງຊັບສິນແຫ່ງລັດ, ກະຊວງການເງິນ ໃນການພິຈາລະນາຄົ້ນຄວ້າ ເພື່ອດຳເນີນການແຈ້ງເສຍຄ່າພັນທະຮ່ວງທຶນຕ່າງໆໃຫ້ລັດ ທີ່ຍັງຄ້າງຊຳລະຕາມສັນຍາສຳປະທານ ຮອດທ້າຍປີ 2024 ໃຫ້ແກ່ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຂອງບັນດາໂຄງການ ລົງທຶນດ້ານບໍ່ແຮ່ ໂດຍອີງຕາມຂໍ້ມູນສະຖິຕິໂຄງການ ປີ 2020 ມີໂຄງການບໍ່ແຮ່ ຈຳນວນ 123 ໂຄງການ ແລະ ໃນ 91 ໂຄງການ ມີຍອດລວມຄ້າງຊຳລະຕາມພັນທະຮອດທ້າຍປີ 2024 ທັງໝົດ 1.18 ລ້ານໂດລາ ສຫລ;
4. ດຳເນີນການສຶກສາຄົ້ນຄວ້າລາຍຮັບຈາກແຫຼ່ງທຶນໃໝ່ ໂດຍສະເພາະລາຍຮັບຈາກຂະແໜງກະສິກຳ ເຊິ່ງໄດ້ປະສານປະສານສົມທົບກັບ ກົມສິ່ງແວດລ້ອມ ໃນການສັງລວມສັນຍາສຳປະທານ ໂຄງການ ລົງທຶນ ຂອງຂະແໜງກະສິກຳ (ຕາມຂໍ້ມູນທີ່ໄດ້ຮັບ) ໂຄງການລົງທຶນດ້ານກະສິກຳ ແລະ ປ່າໄມ້ ທີ່ມີ ພັນທະດ້ານສິ່ງແວດລ້ອມ ຕ້ອງມອບໃຫ້ກອງທຶນ ມີທັງໝົດ 5 ບໍລິສັດ ລວມເງິນພັນທະຕໍ່ປີ 8,400 ໂດລາສະຫະລັດ ຊຶ່ງເປັນໂຄງການລົງທຶນ ປູກພືດປໍແກ້ວ ນຳໃຊ້ທາງການແພດ ແລະ ເປັນສິນຄ້າ (ໄລ ຍະທົດລອງ) ແລະ ມີອາຍຸສັນຍາ 5 ປີ ແຕ່ປີ 2023-2028 ຄື: 1. ບໍລິສັດອານຸວົງ ຈຳກັດຜູ້ດຽວ ລົງ ທຶນຢູ່ເມືອງ ອານຸວົງ ແຂວງ ໄຊສົມບຸນ, 2. ບໍລິສັດ ແມັກລາວ ສົ່ງເສີມກະສິກຳຄົບວົງຈອນ ຈຳກັດຜູ້

ດຽວ ລົງທຶນຢູ່ເມືອງ ທຸລະຄົມ ແຂວງ ວຽງຈັນ, 3. ບໍລິສັດ ເຄທີ ພັດທະນາກະສິກຳ ຈຳກັດ ລົງທຶນຢູ່ເມືອງ ຫາດຊາຍຟອງ ນະຄອນ ຫຼວງວຽງຈັນ, 4. ບໍລິສັດພາໂຊກຈະເລີນຊັບກໍ່ສ້າງຄົບວົງຈອນ ຈຳກັດຜູ້ດຽວ ລົງທຶນຢູ່ເມືອງ ໄຊເສດຖາ, ເມືອງ ນາຊາຍທອງ ນະຄອນຫຼວງວຽງ ຈັນ ແລະ ເມືອງວຽງ ໄຊ ແຂວງ ຫົວພັນ ແລະ 5. ບໍລິສັດ 1 ພຶດສະພາ ກຣຸບ ຈຳກັດຜູ້ດຽວ ລົງທຶນຢູ່ເມືອງ ທຸລະຄົມ ແຂວງ ວຽງຈັນ, ເມືອງນາຊາຍທອງ ແລະ ເມືອງສັງທອງ ນະຄອນຫຼວງວຽງຈັນ;

5. ສຳເລັດເບື້ອງຕົ້ນການເກັບກຳຂໍ້ມູນການລະດົມທຶນສາທິນ (ການຄ່ຽນເງິນ) ຈຳນວນ 5 ໂຄງການ ພາຍໃຕ້ການຄຸ້ມຄອງຂອງ ກປສ ໄລຍະ 2021-2024 ເພື່ອເປັນຂໍ້ມູນໃນການປະເມີນການຈັດຕັ້ງປະຕິບັດແຜນເກັບລາຍຮັບ ແລະ ແຜນລະດົມທຶນ 2021-2025 ພ້ອມທັ້ງສ້າງແຜນ 5 ປີ 2026-2030.

ຕາຕະລາງ 1: ການຈັດຕັ້ງປະຕິບັດລະດົມທຶນ (ລາຍຮັບ) ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ປະຈຳປີ 2025

ລ/ດ	ແຫຼ່ງລາຍຮັບຕົ້ນຕໍ	ແຜນການປີ 2025		ຈັດຕັ້ງປະຕິບັດໝົດ ປີ 2025			ໝາຍເຫດ
		ກີບ	ໂດລາ ສຫລ	ກີບ	ໂດລາ ສຫລ	ເປີເຊັ້ນ	
I	**ລາຍຮັບທຶນພາຍໃນ**	**64,167,432,000**	**3,055,592**	**64,618,136,060**	**3,005,792**	**98%**	
1	**ດອກເບ້ຍຕົ້ນທຶນເງິນຝາກປະຈຳ (10.92 ລ້ານໂດລາ ສຫລ)**	**12,159,000,000**	**579,000**	**12,826,818,921**	**598,096**	103%	
2	**ໂຄງການເງິນປ່ອຍກູ້**	**841,134,000**	**40,054**	**168,750,000**	**7,730**	**17%**	
2.1	ດອກເບ້ຍຈາກໂຄງການເງິນປ່ອຍກູ້	103,257,000	4,917	-	-	0%	
2.2	ຕົ້ນທຶນໂຄງການເງິນກູ້	737,877,000	35,137	**168,750,000**	**7,730**	19%	
3	**ທຶນປະກອບສ່ວນພັນທະສິ່ງແວດລ້ອມ**	**51,167,298,000**	**2,436,538**	**51,427,567,139**	**2,390,983**	98%	
3.1	ທຶນປະກອບສ່ວນຈາກໂຄງການບໍ່ແຮ່	31,177,986,000	1,484,666	**39,583,698,328**	**1,842,496**	124%	
3.2	ທຶນປະກອບສ່ວນຈາກໂຄງການໄຟຟ້າ	19,845,000,000	945,000	**11,781,786,661**	**545,587**	58%	
3.3	ທຶນປະກອບສ່ວນຈາກໂຄງການກະສິກຳ ແລະ ປ່າ ໄມ້	144,312,000	6,872	**62,082,150**	**2,900**	42%	
3.4	ທຶນປະກອບສ່ວນຈາກ ອຸດສາຫະກຳ ແລະ ການຄ້າ	0	0	**0**	**0**		
4.	**ຄ່າປັບໃໝ ແລະ ຄ່າທົດແທນຄວາມເສຍຫາຍຕໍ່ສິ່ງແວດລ້ອມ**	**0**	**0**	**195,000,000**	**8,983**		**ເກີດຂຶ້ນໃຫມ່**
II	ງົບຄຸ້ມຄອງງົບປະມານຕິດຕາມກວດກາວິຊາການ ດ້ານສິ່ງແວດລ້ອມ ແລະ ການຄຸ້ມຄອງອ່າງຮັບນ້ຳ	**85,603,350,000**	**4,076,350**	**49,220,739,542**	**2,159,733**	53%	
2.1	ງົບຄຸ້ມຄອງງົບປະມານຕິດຕາມກວດກາວິຊາການ ດ້ານສິ່ງແວດລ້ອມ	85,603,350,000	4,076,350	48,226,173,542	2,113,911	52%	
2.2	ງົບຄຸ້ມຄອງງົບປະມານ ການຄຸ້ມຄອງອ່າງຮັບນ້ຳ			994,566,000	45,822		
III	**ລາຍຮັບທຶນສາກົນ**	**181,618,878,000**	**8,648,518**		**11,006,991**	127%	
1	ທະນາຄານໂລກ-ໂຄງການ LLL	23,777,880,000	1,132,280		1,119,160	99%	
2	ອົງການ GIZ/GCF (ໂຄງການ I-GFLL)	38,422,902,000	1,829,662		1,934,426	106%	

ລ/ດ	ແໜ່ງລາຍຮັບຕົ້ນຕໍ	ແຜນການປີ 2025		ຈັດຕັ້ງປະຕິບັດໜົດ ປີ 2025			ໝາຍເຫດ
		ກີບ	ໂດລາ ສຫລ	ກີບ	ໂດລາ ສຫລ	ເປີເຊັ້ນ	
3	ອົງການ GIZ/GCF (ໂຄງການ SU-I-GFLM)	47,725,881,000	2,272,661		5,189,490	228%	
4	ອົງການ UNEP/GCF	58,042,215,000	2,763,915		2,763,915	100%	
5	ໂຄງການ PWMP	13,650,000,000	650,000		-	0%	
ລວມລາຍຮັບພາຍໃນ ແລະ ສາກົນ ທັງໜົດ (I+III)		**245,786,310,000**	**11,704,110**		**14,012,783**	120%	

ຕາຕະລາງທີ 2 ການຈັດຕັ້ງປະຕິບັດລາຍຮັບວິຊາການ ກອງທຶນປົກປັກຮັກສາປ່າໄມ້ ປະຈຳປີ 2025

ລ/ດ	ແຫຼ່ງລາຍຮັບຕົ້ນຕໍ	ແຜນການປີ 2025	ຈັດຕັ້ງປະຕິບັດ ປີ 2025		ໝາຍເຫດ
		ກີບ	ກີບ	ເປີເຊັນ	
1	**ແຂວງ ຜົ້ງສາລີ**	**164,000,000**	**421,920,000**	**257.27**	ເກີນແຜນ 157%
*	ເຄື່ອງປ່າຂອງດົງ	-	421,920,000		
*	ພັນທະປຸກໄມ້	-	-		
*	ຄ່າປຸກໄມ້ທົດແທນ	-	-		
*	ຂາຍໄມ້ ແລະ ເຄື່ອງປ່າຂອງດົງທີ່ຮິບເປັນຂອງລັດ	-	-		
*	ຄ່າທຳນຽມຫັນປ່ຽນທີ່ດິນປ່າໄມ້	-	-		
2	**ແຂວງ ຫຼວງນ້ຳທາ**	**43,000,000**	**139,134,600**	**324**	ເກີນແຜນ 224%
*	ເຄື່ອງປ່າຂອງດົງ	-	110,900,000		
*	ພັນທະປຸກໄມ້	-	-		
*	ຄ່າປຸກໄມ້ທົດແທນ	-	28,234,600		
*	ຂາຍໄມ້ ແລະ ເຄື່ອງປ່າຂອງດົງທີ່ຮິບເປັນຂອງລັດ	-	-		
*	ຄ່າທຳນຽມຫັນປ່ຽນທີ່ດິນປ່າໄມ້	-	-		
3	**ແຂວງ ບໍ່ແກ້ວ**	**270,000,000**	**82,686,000**	**30.62**	
*	ເຄື່ອງປ່າຂອງດົງ	-	82,686,000		
*	ພັນທະປຸກໄມ້	-	-		
*	ຄ່າປຸກໄມ້ທົດແທນ	-	-		
*	ຂາຍໄມ້ ແລະ ເຄື່ອງປ່າຂອງດົງທີ່ຮິບເປັນຂອງລັດ	-	-		
*	ຄ່າທຳນຽມຫັນປ່ຽນທີ່ດິນປ່າໄມ້	-	-		
4	**ແຂວງ ອຸດົມໄຊ**	**292,320,000**	**200,809,000**	**69**	
*	ເຄື່ອງປ່າຂອງດົງ	-	71,809,000		
*	ພັນທະປຸກໄມ້	-	-		
*	ຄ່າປຸກໄມ້ທົດແທນ	-	-		
*	ຂາຍໄມ້ ແລະ ເຄື່ອງປ່າຂອງດົງທີ່ຮິບເປັນຂອງລັດ	-	-		
*	ຄ່າທຳນຽມຫັນປ່ຽນທີ່ດິນປ່າໄມ້	-	129,000,000		
5	**ແຂວງ ຫົວພັນ**	**227,855,000**	**677,220,000**	**297**	ເກີນແຜນ 197%
*	ເຄື່ອງປ່າຂອງດົງ	-	23,670,000		

ລ/ດ	ແໜ່ງລາຍຮັບຕົ້ນຕໍ	ແຜນການປີ 2025	ຈັດຕັ້ງປະຕິບັດ ປີ 2025		ໝາຍເຫດ
		ກີບ	ກີບ	ເປີເຊັນ	
*	ພັນທະປຸກໄມ້	-	-		
*	ຄ່າປຸກໄມ້ທົດແທນ	-	30,000,000		
*	ຂາຍໄມ້ ແລະ ເຄື່ອງປ່າຂອງດົງທີ່ຮິບເປັນຂອງລັດ	-	-		
*	ຄ່າທຳນຽມຫັນປ່ຽນທີ່ດິນປ່າໄມ້	-	623,550,000		
6	**ແຂວງ ໄຊຍະບຸລີ**	**247,790,000**	**581,384,000**	**235**	ເກີນແຜນ 135%
*	ເຄື່ອງປ່າຂອງດົງ	-	199,984,000		
*	ພັນທະປຸກໄມ້	-	-		
*	ຄ່າປຸກໄມ້ທົດແທນ	-	-		
*	ຂາຍໄມ້ ແລະ ເຄື່ອງປ່າຂອງດົງທີ່ຮິບເປັນຂອງລັດ	-	-		
*	ຄ່າທຳນຽມຫັນປ່ຽນທີ່ດິນປ່າໄມ້	-	381,400,000		
7	**ແຂວງ ຫຼວງພະບາງ**	**73,250,000**	**314,758,500**	**429.70**	
*	ເຄື່ອງປ່າຂອງດົງ	-	314,758,500		
*	ພັນທະປຸກໄມ້	-	-		
*	ຄ່າປຸກໄມ້ທົດແທນ	-	-		
*	ຂາຍໄມ້ ແລະ ເຄື່ອງປ່າຂອງດົງທີ່ຮິບເປັນຂອງລັດ	-	-		
*	ຄ່າທຳນຽມຫັນປ່ຽນທີ່ດິນປ່າໄມ້	-	-		
8	**ແຂວງ ຊຽງຂວາງ**	**316,200,000**	**1,116,912,420**	**353**	ເກີນແຜນ 253%
*	ເຄື່ອງປ່າຂອງດົງ	-	289,092,420		
*	ພັນທະປຸກໄມ້	-	-		
*	ຄ່າປຸກໄມ້ທົດແທນ	-	-		
*	ຂາຍໄມ້ ແລະ ເຄື່ອງປ່າຂອງດົງທີ່ຮິບເປັນຂອງລັດ	-	-		
*	ຄ່າທຳນຽມຫັນປ່ຽນທີ່ດິນປ່າໄມ້	-	827,820,000		
9	**ແຂວງ ວຽງຈັນ**	**1,173,085,210**	**1,049,607,250**	**89.47**	
*	ເຄື່ອງປ່າຂອງດົງ	-	-		
*	ພັນທະປຸກໄມ້	-	350,000,000		
*	ຄ່າປຸກໄມ້ທົດແທນ	-	-		
*	ຂາຍໄມ້ ແລະ ເຄື່ອງປ່າຂອງດົງທີ່ຮິບເປັນຂອງລັດ	-	-		

ລ/ດ	ແໜ່ງລາຍຮັບຕົ້ນຕໍ	ແຜນການປີ 2025	ຈັດຕັ້ງປະຕິບັດ ປີ 2025		ໝາຍເຫດ
		ກີບ	ກີບ	ເປີເຊັນ	
*	ຄ່າທຳນຽມຫັນປ່ຽນທີ່ດິນປ່າໄມ້	-	699,607,250		
10	**ແຂວງ ໄຊສົມບຸນ**	**249,000,000**	**126,389,000**	**50.76**	
*	ເຄື່ອງປ່າຂອງດົງ	-	126,389,000		
*	ພັນທະປຸກໄມ້	-	-		
*	ຄ່າປຸກໄມ້ທົດແທນ	-	-		
*	ຂາຍໄມ້ ແລະ ເຄື່ອງປ່າຂອງດົງທີ່ຮິບເປັນຂອງລັດ	-	-		
*	ຄ່າທຳນຽມຫັນປ່ຽນທີ່ດິນປ່າໄມ້	-	-		
11	**ນະຄອນຫຼວງວຽງຈັນ**	**199,600,000**	**15,270,000**	**8**	
*	ເຄື່ອງປ່າຂອງດົງ	-	15,270,000		
*	ພັນທະປຸກໄມ້	-	-		
*	ຄ່າປຸກໄມ້ທົດແທນ	-	-		
*	ຂາຍໄມ້ ແລະ ເຄື່ອງປ່າຂອງດົງທີ່ຮິບເປັນຂອງລັດ	-	-		
*	ຄ່າທຳນຽມຫັນປ່ຽນທີ່ດິນປ່າໄມ້	-	-		
12	**ແຂວງ ບໍລິຄຳໄຊ**	**1,275,000,000**	**2,832,700,000**	**222**	ເກີນແຜນ 122%
*	ເຄື່ອງປ່າຂອງດົງ	-	1,600,000,000		
*	ພັນທະປຸກໄມ້	-	-		
*	ຄ່າປຸກໄມ້ທົດແທນ	-	-		
*	ຂາຍໄມ້ ແລະ ເຄື່ອງປ່າຂອງດົງທີ່ຮິບເປັນຂອງລັດ	-	-		
*	ຄ່າທຳນຽມຫັນປ່ຽນທີ່ດິນປ່າໄມ້	-	1,232,700,000		
13	**ແຂວງ ຄຳມ່ວນ**	**393,597,648**	**437,000,000**	**111.03**	ເກີນແຜນ 11 %
*	ເຄື່ອງປ່າຂອງດົງ	-	437,000,000		
*	ພັນທະປຸກໄມ້	-	-		
*	ຄ່າປຸກໄມ້ທົດແທນ	-	-		
*	ຂາຍໄມ້ ແລະ ເຄື່ອງປ່າຂອງດົງທີ່ຮິບເປັນຂອງລັດ	-	-		
*	ຄ່າທຳນຽມຫັນປ່ຽນທີ່ດິນປ່າໄມ້	-	-		
14	**ແຂວງ ສະຫວັນນະເຂດ**	**128,723,210**	**1,009,575,000**	**784**	ເກີນແຜນ 684%
*	ເຄື່ອງປ່າຂອງດົງ	-	-		
*	ພັນທະປຸກໄມ້	-	-		

ລ/ດ	ແຫຼ່ງລາຍຮັບຕົ້ນຕໍ	ແຜນການປີ 2025	ຈັດຕັ້ງປະຕິບັດ ປີ 2025		ໝາຍເຫດ
		ກີບ	ກີບ	ເປີເຊັ້ນ	
*	ຄ່າປູກໄມ້ທົດແທນ	-	-		
*	ຂາຍໄມ້ ແລະ ເຄື່ອງປ່າຂອງດົງທີ່ຮິບເປັນຂອງລັດ	-	-		
*	ຄ່າທຳນຽມຫັນປ່ຽນທີ່ດິນປ່າໄມ້	-	1,009,575,000		
15	**ແຂວງ ສາລະວັນ**	**260,000,000**	**239,442,500**	**92.09**	
*	ເຄື່ອງປ່າຂອງດົງ	-	-		
*	ພັນທະປູກໄມ້	-	239,442,500		
*	ຄ່າປູກໄມ້ທົດແທນ	-	-		
*	ຂາຍໄມ້ ແລະ ເຄື່ອງປ່າຂອງດົງທີ່ຮິບເປັນຂອງລັດ	-	-		
*	ຄ່າທຳນຽມຫັນປ່ຽນທີ່ດິນປ່າໄມ້	-	-		
16	**ແຂວງ ຈຳປາສັກ**	**664,039,680**	**140,123,000**	**21.10**	
*	ເຄື່ອງປ່າຂອງດົງ	-	-		
*	ພັນທະປູກໄມ້	-	62,723,000		
*	ຄ່າປູກໄມ້ທົດແທນ	-	-		
*	ຂາຍໄມ້ ແລະ ເຄື່ອງປ່າຂອງດົງທີ່ຮິບເປັນຂອງລັດ	-	-		
*	ຄ່າທຳນຽມຫັນປ່ຽນທີ່ດິນປ່າໄມ້	-	77,400,000		
17	**ແຂວງ ເຊກອງ**	**728,000,000**	**924,902,766**	**127**	ເກີນແຜນ 27%
*	ເຄື່ອງປ່າຂອງດົງ	-	-		
*	ພັນທະປູກໄມ້	-	-		
*	ຄ່າປູກໄມ້ທົດແທນ	-	578,064,966		
*	ຂາຍໄມ້ ແລະ ເຄື່ອງປ່າຂອງດົງທີ່ຮິບເປັນຂອງລັດ	-	-		
*	ຄ່າທຳນຽມຫັນປ່ຽນທີ່ດິນປ່າໄມ້	-	346,837,800		
18	**ແຂວງ ອັດຕະປື**	**374,686,988**	**514,860,000**	**137**	ເກີນແຜນ 37%
*	ເຄື່ອງປ່າຂອງດົງ	-	-		
*	ພັນທະປູກໄມ້	-	-		
*	ຄ່າປູກໄມ້ທົດແທນ	-	-		
*	ຂາຍໄມ້ ແລະ ເຄື່ອງປ່າຂອງດົງທີ່ຮິບເປັນຂອງລັດ	-	-		
*	ຄ່າທຳນຽມຫັນປ່ຽນທີ່ດິນປ່າໄມ້	-	514,860,000		

ລ/ດ	ແຫຼ່ງລາຍຮັບຕົ້ນຕໍ	ແຜນການປີ 2025	ຈັດຕັ້ງປະຕິບັດ ປີ 2025		ໝາຍເຫດ
		ກີບ	ກີບ	ເປີເຊັ້ນ	
ລວມລາຍຮັບທັ້ງໝົດ (1+2+3+4+5+6+7+8+9+10+11+12+13+14+15+16+17+18)		7,080,147,736	10,824,694,036	153	ເກີນແຜນ 53%

ຕາຕະລາງທີ 3 ການຈັດຕັ້ງປະຕິບັດລາຍຮັບໂຄງການລົງທຶນ (ພະລັງງານ ແລະ ບໍ່ແຮ່) ປະຈຳປີ2025

ລ/ດ	ແຫຼ່ງລາຍຮັບຕົ້ນຕໍ	ແຜນການປີ 2025		ຈັດຕັ້ງປະຕິບັດປີ 2025			ໝາຍເຫດ
		ກີບ	ໂດລາ ສຫລ	ຮັບ ກີບ	ຮັບ ໂດລາ ສຫລ	ເປີເຊັ້ນ	
1	ໂຄງການລົງທຶນ ດ້ານພະລັງງານລົມ			12428,233,200	45,000		
2	ໂຄງການລົງທຶນ ດ້ານພະລັງງານນ້ຳ			13,661,159,900	47,093.22		
3	ໂຄງການລົງທຶນ ດ້ານບໍ່ແຮ່			1.354,478,000	160,000		
	ລວມທັ້ງໝົດ:			**27,443,871,100**	**252,093**		

2.5.ດ້ານການສະໜອງທຶນ: ຈັດຕັ້ງປະຕິບັດແຜນສະໜອງທຶນ 2021-2025 ໄປຕາມ 7 ຮ່ອງທຶນ ແລະ ຮັບປະກັນການສະໜອງທຶນໄປຕາມທິດທາງແຜນການທີ່ວາງໄວ້; ຕ້ອງຮັບປະ ກັນການສະໜອງທຶນ ແລະ ສະສົມທຶນໄປຕາມທິດທາງແຜນການທີ່ວາງໄວ້ ແລະ ບັນລຸຄາດໝາຍປະມານ 13.41 ລ້ານໂດລາ ສຫລ. ໃນນີ້, ສະໜອງທຶນໂຄງການພາຍໃນ ຈຳນວນ 1.63 ໂດລາ ສຫລ (ໂຄງການສະເໜີໃໝ່ 0.53 ລ້ານໂດ ລາ ສຫລ ແລະ ໂຄງການທີ່ຈັດຕັ້ງປະຕິບັດ 1.10 ລ້ານໂດລາ ສຫລ) ແລະ ທຶນສາກົນ ຈຳນວນ 11.78 ລ້ານໂດລາ ສຫລ

ໃນປີ 2025 ຫ້ອງການກອງທຶນ ໄດ້ສະໜອງງົບປະມານໃນການຈັດຕັ້ງປະຕິບັດກິດຈະກຳ ລວມ ທັງ ງົບປະມານບໍລິຫານ ໃນເບື້ອງກອງທຶນຂອງສິ່ງແວດລ້ອມໃຫ້ໂຄງການຍ່ອຍ ລວມເປັນເງິນທັ້ງໝົດ 12.2 ລ້ານໂດລາ ສຫລ ເທົ່າກັບ 91% ຂອງແຜນປີ. ໃນນີ້, ທຶນພາຍໃນ 25.46 ຕື້ກີບ ເທົ່າກັບ 1.19 ລ້ານໂດລາ ສຫລ ແລະ ທຶນສາກົນ 11.04 ລ້ານໂດລາ ສຫລ. ສຳລັບໂຄງການສະເໜີໃໝ່ໃນປີ 2025 ແມ່ນມີທັງໝົດ 15 ໂຄງການ ລວມມູນຄ່າສະໜອງທຶນໂຄງການ 14,278,492,000 ຕື້ກັບ (ລະອຽດ ລະບຸໃນຕາຕະລາງທີ 4)

- ທຶນພາຍໃນ ສາມາດສະໜອງງົບປະມານໃນການຈັດຕັ້ງປະຕິບັດກິດຈະກຳ ລວມທັງ ງົບປະມານ ບໍລິຫານ ຈຳນວນ 25.5 ຕື້ກີບ ຫຼື ທຽບເທົ່າ 1.19 ລ້ານໂດລາ ສຫລ ເທົ່າກັບ 74% ທຽບໃສ່ແຜນປີ 1.6 ລ້ານໂດລາ ສຫລ ຄື:

– ສະໜອງງົບປະມານໃຫ້ໂຄງການຍ່ອຍ 35 ຄກ ເປັນເງິນ ຈຳນວນ 6.06 ຕື້ກີບ ຫລື 0.28 ລ້ານໂດ ລາ ສຫລ ປະກອບມີ: ຮ່ວງທຶນດ້ານນະໂຍບາຍ 6 ຄກ ຈຳນວນ 644,300,000 ກີບ ຫລື 30,098 ໂດລາ ສຫລ, ຮ່ວງທຶນດ້ານຊີວະນາໆພັນ 10 ຄກ ຈຳນວນ 1,780,991,950 ກີບ ຫລື 83,197ໂດ ລາ ສຫລ, ຮ່ວງທຶນດ້ານສິ່ງແວດລ້ອມ 11 ຄກ ຈຳນວນ 2,151,128,000 ກີບ ຫລື 100,487ໂດລາ ສຫລ, ຮ່ວງທຶນດ້ານການຄຸ້ມຄອງຊັບພະຍາກອນນ້ຳ 4 ຄກ ຈຳນວນ 591,934 ກີບ ຫຼື 27,651 ໂດ ລາ ສຫລ, ຮ່ວງທຶນດ້ານການຄຸ້ມຄອງທີ່ດິນ 1 ຄກ ຈຳນວນ 352,556 ກີບ ຫຼື 16,469 ໂດລາ ສຫລ , ຮ່ວງທຶນດ້ານການປ່ຽນແປງດິນຟ້າອາກາດ 3 ຄກ ຈຳນວນ 538,151 ກີບ ຫລື 25,139 ໂດລາ ສຫລ;

- ສະໜອງທຶນໃຫ້ພາກສ່ວນຕ່າງໆ ທີ່ສະເໜີຂໍນຳໃຊ້ງົບປະມານຕິດຕາມກວດກາວິຊາການສິ່ງແວດລ້ອມ ແລະ ອ່າງຮັບນ້ຳ 169 ພາກສ່ວນ ເປັນເງິນຈຳນວນ 19.4 ຕື້ກວ່າກີບ ຫຼື 906,510 ໂດລາ ສຫລ ຄື: ສູນກາງ 3 ພາກສ່ວນຈຳນວນ 11.721,538,616 ກີບ ຫຼື 547,556 ໂດລາ ສຫລ, ແຂວງ 18 ພາກສ່ວນ ແລະ ຂັ້ນເມືອງ 148 ພາກສ່ວນ ລວມຈຳນວນ 7,684,124,935 ກີບ ຫລື 358,954 ໂດລາ ສຫລ.

➢ ທຶນສາກົນ ໄດ້ສະໜອງທຶນໃຫ້ໂຄງການຍ່ອຍ ກອງທຶນບ້ານ ແລະ ລາຍຈ່າຍບໍລິຫານ ລວມເປັນເງິນທັງໝົດ ຈຳນວນ 11.04 ລ້ານໂດລາ ສຫລ ເທົ່າກັບ 94% ທຽບໃສ່ແຜນປີ 11.7 ລ້ານໂດລາ ສຫລ ຄື:

- ສະໜອງງົບປະມານ ໃຫ້ໂຄງການຍ່ອຍ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ໂຄງການຟູມີທັດ ແລະ ປັບປຸງຊີວິດການເປັນຢູ່ (LLL) 1.12 ລ້ານໂດລາ ສຫລ;
- ສະໜອງງົບປະມານ ໃຫ້ ໂຄງການຍ່ອຍ ແລະ ກອງທຶນບ້ານ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ໂຄງ ການ I-GFLL ຈຳນວນ 1.9 ລ້ານໂດລາ ສຫລ;
- ສະໜອງງົບປະມານ ໃຫ້ ໂຄງການຍ່ອຍ ແລະ ກອງທຶນບ້ານ ຢູ່ພາຍໃຕ້ການຄຸ້ມຄອງຂອງ ໂຄງການ SU-I-GFLM (REDD+) ໃນ 3 ແຂວງພາກເໜືອ (ແຂວງ ບໍ່ແກ້ວ, ອຸດົມໄຊ ແລະ ຫຼວງນ້ຳທາ) 5.12 ລ້ານໂດລາ ສຫລ;
- ສະໜອງງົບປະມານ ໃນການຈັດຕັ້ງປະຕິບັດກິດຈະກຳ ແລະ ລາຍຈ່າຍບໍລິຫານ 2.76 ລ້ານ ໂດລາ ສຫລ ໃຫ້ພາກສ່ວນຕ່າງໆ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ໂຄງການສ້າງຄວາມທົນທານຂອງ ປະຊາຄອນໃນຕົວເມືອງ ເພື່ອປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໂດຍການຄຸ້ມຄອງ ແລະ ນຳໃຊ້ທ່າແຮງຂອງລະບົບນິເວດ" ໃນນະຄອນຫຼວງວຽງຈັນ ແລະ 3 ແຂວງ (ບໍລິຄຳໄຊ, ສະຫວັນນະເຂດ ແລະ ຈຳປາສັກ);
- ສຳລັບການສະໜອງທຶນໃນການຈັດຕັ້ງປະຕິບັດໂຄງການສ້າງຄວາມເຂັ້ມແຂງ ແລະ ກະກຽມຄວາມພ້ອມໃຫ້ ກປສ ເພື່ອກາຍເປັນອົງກອນແຫ່ງຊາດທີ່ສາມາດເຂົ້າຫາແຫຼ່ງທຶນສາກົນໂດຍກົງ ມີພຽງລາຍຈ່າຍຄ່າທຳນຽມບໍລິການທະນາຄານ ຈຳນວນ 32,981 ໂດລາ ສຫລ;
- ສຳລັບໂຄງການຄຸ້ມຄອງມົນລະພິດ ແລະ ສິ່ງເສດເຫຼືອ ຢູ່ ສປປ ລາວ PWMP. ແມ່ນຍັງບໍ່ເຊັນສັນຍາຮັບເອົາໂຄງການ ຈຶ່ງຍັງບໍ່ມີລາຍຈ່າຍ.

ນອກນັ້ນ, ຍັງໄດ້ສະໜອງງົບປະມານລາຍຮັບວິຊາການ ເບື້ອງກອງທຶນປ່າໄມ້ ໃຫ້ບັນດາແຂວງ ແລະ ພາກສ່ວນກ່ຽວຂ້ອງ ຈຳນວນ 7 ຕື້ກີບ ແລະ ສະໜອງທຶນໂຄງການລິ່ງທຶນ (ພະລັງງານ ແລະ ບໍ່ແຮ່) ໃນວຽກງານ ປູກປ່າທົດແທນ, ຟື້ນຟູປ່າ, ຈ່າຍຄ່າບໍລິການວິຊາການ, ຄ່ບໍລິການລະບົບນິເວດ, ຄ່າບໍລິການລະບົບນິເວດປ່າໄມ້, ຄ່າທົດແທນຊີວະນາໆພັນ, ຄ່າປັບໜ້າດິນຄືນ ທີ່ໄດ້ຫັນປ່ຽນທີ່ດິນປ່າໄມ້ເປັນອ່າງເກັບນ້ຳ ແລະ ເຂດຂຸດຄົ້ນບໍ່ແຮ່ ໄດ້ທັງໝົດ ຈຳນວນ **29.5** ຕື້ກີບ ທຽບເທົ່າ **1,378,403** ໂດລາ ສຫລ (ລາຍລະອຽດ ລະບຸໃນຕາຕະລາງ 5 ແລະ 6)

ຕາຕະລາງ 4: ການສະໜອງງົບປະມານໃຫ້ໂຄງການຍ່ອຍ (ທຶນພາຍໃນ ແລະ ທຶນສາກົນ) ແລະ ລາຍຮັບວິຊາການ ຂອງຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ປະຈຳ ປີ 2025 (Exchange rate 21,047)

ລ/ດ	ລາຍລະອຽດຮ່ວງທຶນ	ຈຳນວນ ໂຄງການ	ແຜນສະໜອງທຶນປີ 2025		ດັດແກ້ ປີ 2025		ເບີກຈ່າຍໄດ້ຕົວຈິງ		ສົມທຽບ ເປີເຊັ່ນ
			ກີບ	ໂດລາ ສຫລ	ກີບ	ໂດລາ ສຫລ	ກີບ	ໂດລາ ສຫລ	
I	**ລາຍຈ່າຍກິດຈະກຳທຶນພາຍໃນ**	**34**	**23,175,541,000**	**1,103,597**	**33,815,021,000**	**1,610,239**	**25,464,724,461**	**1,189,551**	74%
1	ຮ່ວງທຶນ ດ້ານນະໂຍບາຍ	7	906,990,000	43,190	906,990,000	43,190	644,300,000	30,098	70%
2	ຮ່ວງທຶນ ດ້ານຊີວະນາໆພັນ	9	2,764,986,000	131,666	2,764,986,000	131,666	1,780,991,950	83,197	63%
3	ຮ່ວງທຶນ ດ້ານສິ່ງແວດລ້ອມ ລວມທັ້ງການຄຸ້ມຄອງ ແລະ ແກ້ໄຂ ມົນລະພິດ	9	2,512,041,000	119,621	2,512,041,000	119,621	2,151,128,000	100,487	84%
4	ຮ່ວງທຶນດ້ານການຄຸ້ມຄອງຊັບພະຍາ ກອນນ້ຳ	4	447,300,000	21,300	447,300,000	21,300	591,934,000	27,651	130%
5	ຮ່ວງທຶນ ດ້ານການຄຸ້ມຄອງທີ່ດິນ	4	702,009,000	33,429	702,009,000	33,429	352,556,000	16,469	49%
6	ຮ່ວງທຶນ ດ້ານການຄຸ້ມຄອງການປ່ຽນ ແປງດິນຟ້າອາກາດ	1	397,215,000	18,915	397,215,000	18,915	538,151,000	25,139	133%
7	ຮ່ວງທຶນ ຕິດຕາມກວດກາວິຊາການ ດ້ານສິ່ງແວດລ້ອມ ແລະ ການຄຸ້ມຄອງອ່າງຮັບນ້ຳ	145 ເມືອງ ແລະ 3 ນະ ຄອນ	15,445,000,000	735,476	19,815,000,000	943,571	19,405,663,511	906,510	96%
8	**ລາຍຈ່າຍບໍລິຫານ**		**6,269,480,000**	**298,547**	-	-	-	-	**0**
	ລວມລາຍຈ່າຍທຶນພາຍໃນທັ້ງໝົດ		**29,445,021,000**	**1,402,144**	**29,445,021,000**	**1,402,144**	**25,464,724,461**	-	-
II	**ລາຍຈ່າຍກິດຈະກຳທຶນສາກົນ**								
1	ທຶນທະນາຄານໂລກ ໂຄງການ LLL		20,795,460,000	990,260	20,795,460,000	990,260	23,957,858,120	1,119,160	113%

ລ/ດ	ລາຍລະອຽດຮ່ວງທຶນ	ຈຳນວນ ໂຄງການ	ແຜນສະໜອງທຶນປີ 2025		ດັດແກ້ ປີ 2025		ເບີກຈ່າຍໄດ້ຕົວຈິງ		ສົມທຽບ ເປີເຊັ້ນ
			ກີບ	ໂດລາ ສຫລ	ກີບ	ໂດລາ ສຫລ	ກີບ	ໂດລາ ສຫລ	
2	ທຶນ GCF/GIZ (I-GFLL)		54,793,200,000	2,609,200	54,793,200,000	2,609,200	41,410,257,382	1,934,426	74%
3	ທຶນ GCF/GIZ (SU-I-GFLM)		98,910,441,000	4,710,021	98,910,441,000	4,710,021	111,091,412,430	5,189,490	110%
4	ທຶນ UNEP/GCF (ບໍລິຫານ)		58,042,215,000	2,763,915	58,042,215,000	2,763,915	59,167,128,405	2,763,915	100%
5	ທຶນ GCF/UNOP (ບໍລິຫານ)		1,134,000,000	54,000	1,134,000,000	54,000	706,024,267	32,981	61%
6	ທຶນທະນາຄານໂລກ ໂຄງການ PWMP		13,650,000,000	650,000	13,650,000,000	650,000			0%
	ລວມລາຍຈ່າຍທຶນສາກົນທັງໝົດ:		**247,325,316,000**	**11,777,396**	**247,325,316,000**	**11,777,396**	**236,332,680,604**	**11,039,972**	94%
	ລວມການສະໜອງທຶນພາຍໃນ ແລະ ສາກົນ ທັງໝົດ (I+II)		**276,770,337,000**	**13,179,540**	**281,140,337,000**	**13,387,635**	**261,797,405,065**	**12,229,523**	91%

ຕາຕະລາງ 5: ການສະໜອງງົບປະມານ ລາຍຮັບວິຊາການບ້ວງເຄື່ອງປ່າຂອງດີ ຂອງກອງທຶນປົກປັກຮັກສາປ່າໄມ້ ປະຈຳປີ 2025

ລ/ດ	ເນື້ອໃນ	ແຜນການປີ 2025	ດັດແກ້ເພີ່ມ	ລວມ	ປະຕິບັດຕົວຈິງ	ທຽບ ເປັນ ເປີເຊັ້ນ
1	2	3	4	5=3+4	6	7
1	ຄຸ້ມຄອງປ່າສະຫງວນ, ປ່າປ້ອງກັນ, ປ່າໄມ້ບ້ານ	1,100,000,000	-	1,100,000,000	1,100,000,000	100%
2	ກວດກາລາດຕະເວນ, ຟື້ນຟູປ່າ, ປ້ອງກັນໄຟປ່າ	1,375,000,000	-	1,375,000,000	1,375,000,000	100%
3	ສ້າງ, ປັບປຸງນິຕິກຳ ແລະ ເຜີຍແຜ່ວຽກງານປົກປັກຮັກສາປ່າໄມ້	1,000,000,000	-	1,000,000,000	1,000,000,000	100%
4	ຊຸກຍູ້ ຕິດຕາມການເກັບລາຍຮັບ ທີ່ນຳໃຊ້ງົບປະມານກອງທຶນປົກປັກຮັກສາ ປ່າໄມ້	925,000,000	-	925,000,000	925,000,000	100%

5	ປະເມີນຜົນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງປ່າໄມ້ ປະຈຳປີ 2025	1,100,000,000	-	1,100,000,000	1,100,000,000	100%
6	ຕິດຕາມ, ກວດກາປະເມີນຜົນການນຳໃຊ້ງົບປະມານ	-	1,500,000,000	1,500,000,000	1,500,000,000	100%
	ລວມທັງໝົດ	**5,500,000,000**	**1,500,000,000**	**7,000,000,000**	**7,000,000,000**	**100%**

ຕາຕະລາງ 6: ການສະໜອງງົບປະມານ ໂຄງການລົງທຶນ (ພະລັງງານ ແລະ ບໍ່ແຮ່) ຕາມມະຕິຄະນະປະຈຳສະພາແຫ່ງຊາດ ຟື້ນຟູປ່າ ແລະ ປູກປ່າທົດແທນ ປະຈຳປີ 2025 (ອັດຕາແລກປ່ຽນການສະໜອງງົບປະມານ 21,407ກີບ)

ລ/ດ	ແຫຼ່ງລາຍຮັບຕົ້ນຕໍ	ແຜນການປີ 2025		ຈັດຕັ້ງປະຕິບັດປີ 2025			ໝາຍເຫດ
		ກີບ	ໂດລາ ສຫລ	ກີບ	ໂດລາ ສຫລ	ເປີເຊັນ	
1	ວຽກງານ ຟື້ນຟູປ່າ, ປູກປ່າທົດແທນ	39,629,249,461	1,887,107.12	21,276,593,400	993,908	54%	
2	ຄຸ້ມຄອງປ່າ ແລະ ຊີວະນາໆພັນ	30,762,497,430	1,464,880.83	8,239,882,683	384,915.34	26%	
	ລວມທັງໝົດ	**70,391,746,891**	**3,351,987.95**	**29,507,476,083**	**1,378,403**	**42%**	

2.6.ດ້ານການຮ່ວມມື: ***ສ້າງແຜນການຮ່ວມມື ແລະ ຫັນເປັນຄູ່ຮ່ວມງານກັບພາຍໃນ ແລະ ສາ ກົນ 5 ປີ (2026-2030). ພ້ອມທັ້ງສືບຕໍ່ຮ່ວມມືຢ່າງໃກ້ຊິດກັບຄູ່ຮ່ວມງານ (ທະນາຄານໂລກ, ກຊສ ແລະ ຍທຂ) ໃນການຈັດຕັ້ງປະຕິບັດໂຄງການສິ່ງແວດລ້ອມ ແລະ ສັງເສດເຫຼືອ ແລະ ໂຄງການຂະໜາດນ້ອຍທີ່ໄດ້ຮັບທຶນຈາກ ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດ (GCF)***

ຫ້ອງການກອງທຶນ ໄດ້ປະຊຸມປຶກສາຫາລືຮ່ວມກັບທະນາຄານໂລກ ແລະ ກະຊວງໂຍທາທິການ ແລະ ຂົນສົ່ງ ກ່ຽວກັບການກະກຽມໂຄງການ PWMP ແລະ ຮ່ວມເຈລະຈາສັນຍາເງິນກູ້ຢືມ ແລະ ສັນຍາເງິນຊ່ວຍເຫຼືອລ້າ ຊຶ່ງໄດ້ສຳເລັດການເຊັນສັນຍາ 2 ສະບັບຄື: 1. ສັນຍາມອບຕໍ່ລະຫວ່າງ ກົມຄຸ້ມຄອງໜີ້ສິນສາທາລະນະ ກະຊວງການເງິນ ກັບ ກປສ ແລະ 2. ສັນຍາໂຄງການລະຫວ່າງທະນາຄານໂລກ ກັບ ກປສ ເພື່ອຈັດຕັ້ງປະຕິບັດບັນດາກິດຈະກຳຕ່າງໆທີ່ກຳນົດໄວ້ໃນ ໂຄງການ PWMP ແລະ ສຳເລັດ ການທົບທວນບັນດາເອກະສານຄູ່ມື POM, FM Mannual ແຜນຈັດຊື້ຈັດຈ້າງຂອງໂຄງການທີ່ຈະນຳ ໃຊ້ໃນໂຄງການ PWMP ແລະ ໄດ້ນຳສົ່ງໃຫ້ທະນາໂລກຕາມກຳນົດເວລາ. ພ້ອມນີ້, ໄດ້ສັງລວມຂໍ້ມູນ ເພື່ອສ້າງແຜນການຮ່ວມມື ແລະ ຫັນເປັນຄູ່ຮ່ວມງານກັບພາຍໃນ ແລະ ສາກົນ 5 ປີ (2026-2030). ນອກນັ້ນ, ຍັງໄດ້ປະຕິບັດວຽກງານທີ່ເປັນບຸລິມະສິດຂອງຫ້ອງການກອງທຶນ ເປັນຕົ້ນ:

1. ຈັດກອງປະຊຸມປຶກສາຫາລື ແລະ ແລກປ່ຽນບົດຮຽນ ກ່ຽວກັບການລະດົມທຶນ ແລະ ການເກັບພັນທະ ສັນຍາສຳປະທານ ຮ່ວມກັບບັນດາກົມກອງ ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງການເງິນ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ຂະແໜງການທີ່ກ່ຽວຂ້ອງ 1 ຄັ້ງ;
2. ຈັດກອງປະຊຸມແລກປ່ຽນບົດຮຽນ ກ່ຽວກັບການຈັດຕັ້ງປະຕິບັດ ແລະ ການຄຸ້ມຄອງບໍລິຫານທຶນ ຮ່ວມກັບບັນດາກອງທຶນຕ່າງໆ ຂອງລັດ ໃນ ສປປ ລາວ 1 ຄັ້ງ;
3. ຈັດປະຊຸມແລກປ່ຽນບົດຮຽນການຈັດຕັ້ງປະຕິບັດໂຄງການທຶນສົມທົບ MGFA-GIZ ແລະ ເຮັດ ວຽກຮ່ວມກັບຊ່ຽວຊານ ຂອງສະຫະພາບເອີລົບ ກ່ຽວກັບການເກັບກຳຂໍ້ມູນວຽກງານການລະດົມທຶນ ແລະ ການສະໜອງທຶນ ຂອງກອງທຶນ ເພື່ອກະກຽມແຜນການລະດົມທຶນ ມາສະໜັບສະໜຸນ ໃຫ້ ກອງທຶນໃນອະນາຄົດ;
4. ພົບປະກັບຊ່ຽວຊານ ຂອງ ADB ເພື່ອແລກປ່ຽນຂໍ້ມູນຮ່ວມກັນດ້ານວຽກງານ carbon maket, ພົບ ປະກັບທີມງານ ຊ່ຽວຊານຂອງ UNDP ແລກປ່ຽນຂໍ້ມູນທາງດ້ານການລະດົມທຶນ ແລະ ສະໜອງທຶນ ໃຫ້ວຽກງານຊີວິນາໆພັນໃນ ສປປ ລາວ ລວມທັ້ງກົນໄກການເກັບຄ່າລະບົບນິເວດ ແລະ ໄດ້ພົບປະ ກັບຫົວໜ້າ GIZ ASIA ປະຈຳພາກພື້ນອາຊີ ແລະ ຫົວໜ້າຫ້ອງການ GIZ ປະຈຳລາວ ເພື່ອ ແລກປ່ຽນຂໍ້ມູນການໄກ່ການບໍລິຫານງານ ຂອງກອງທຶນ ແລະຫັນເປັນຄູ່ຮ່ວມງານທີ່ແໜ້ນແຟ້ນກັບ GIZ ໃນການຈັດຕັ້ງປະຕິບັດໂຄງການໃນຕໍ່ໜ້າ;
5. ປະສານສົມທົບກັບ GIZ ໃນການຈັດຕັ້ງປະຕິບັດໂຄງການ I-GFLL ພ້ອມທັ້ງສະເໜີຕໍ່ສັນຍານຳຜູ້ ໃຫ້ທຶນ GCF ແລະ BMZ ເຍຍລະມັນ ຊຶ່ງສອງພາກສ່ວນໄດ້ເຫັນດີເຊັນສັນຍາຮ່ວມມື ແລະ ໄດ້ເຊັນ ສັນຍາກັບຝ່າຍລາວ (ກຊສ ແລະ ກກປ) ໃນວັນທີ 8 ພຶດສະພາ 2025. ພ້ອມນີ້, ໄດ້ປະສານສົມທົບ ກັບກົມສິ່ງແວດລ້ອມ ກ່ຽວກັບການຈັດຕັ້ງປະຕິບັດໂຄງການທີ່ໄດ້ຮັບທຶນຜ່ານ UNEP ໂດຍສົມທົບ ກັບກະຊວງການເງິນ ໃນການປັບປຸງກົນໄກການເບີກຈ່າຍທີ່ຜ່ານກະຊວງການເງິນ ໃຫ້ມີຄວາມໂລ່ງ ລ່ຽນ ແລະ ທັນກັບແຜນການ;
6. ເຂົ້າຮ່ວມກອງປະຊຸມ ແລກປ່ຽນບົດຮຽນການລົງທຶນດ້ານກະສິກຳທີ່ສະຫຼາດທາງດ້ານດິນຟ້າອາກາດ ແລະ ການປະຕິບັດນະໂຍບາຍໃນພາກຕາເວັນອອກຊຽງໃຕ້ຂອງອາຊີ ທີ່ຊຽງໃໝ່ ປະເທດໄທ;
7. ເຂົ້າຮ່ວມກອງປະຊຸມແລກປ່ຽນບົດຮຽນ ກ່ຽວກັບວຽກງານການປ່ຽນແປງດິນຟ້າອາກາດ ຊຶ່ງໃນນີ້ ກອງທຶນ ໄດ້ນຳສະເໜີແລກປ່ຽນພາລະບົດບາດ ແລະ ກົນໄກການລະດົມທຶນ ແລະ ສະໜອງທຶນ

ພ້ອມທັງການຄຸ້ມຄອງບໍລິຫານທຶນສາກົນ ໃນ ສປປ ລາວ ພ້ອມທັງການປັບປຸງກົນໄກ ກອງທຶນໃຫ້ຢູ່ໃນເງື່ອນໄຂຂອງ GCF ເພື່ອເຂົ້າເປັນ AE ແລະ ສາມາດລະດົມທຶນໄດ້ໂດຍກົງ ຈາກ GCF ທີ່ພະນິມເປັນ ປະເທດຈຳປຸເຈຍ.

2.7.ດ້ານການສື່ສານ: ***ສ້າງ ແລະ ຈັດຕັ້ງປະຕິບັດແຜນດຳເນີນງານການສື່ສານ ແລະ ການມີສ່ວນຮ່ວມ 5 ປີ (2021-2025) ແລະ ກະກຽມແຜນການ 5 ປີ (2026-2030) ເພື່ອຂໍອະນຸມັດຈາກສະພາບໍລິຫານ***

ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການປັບປຸງແຜນດຳເນີນງານການສື່ສານ ແລະ ການມີສ່ວນຮ່ວມ 5 ປີ 2021-2025 ແລະ ກະກຽມແຜນການ 5 ປີ 2026-2030. ພ້ອມນັ້ນ, ຍັງໄດ້ໂຄສະນາເຜີຍແຜ່ຜົນງານຂອງ ກປສ ຜ່ານສື່ຕ່າງໆ ແລະ ວາງສະແດງໃນງານສຳຄັນຕ່າງໆ ຢ່າງເປັນຂະບວນຟົດຟື້ນ. ນອກນີ້, ຫ້ອງການກອງທຶນ ຍັງໄດ້ສືບຕໍ່ຈັດຕັ້ງປະຕິບັດບັນດາໜ້າວຽກຈຸດສຸມຕ່າງໆ ຕາມແຜນການທີ່ກຳນົດໄວ້ ດັ່ງນີ້:

1. ສຳເລັດຮ່າງເບື້ອງຕົ້ນແຜນດຳເນີນງານການສື່ສານການມີສ່ວນຮ່ວມ ຂອງ ກປສ (2023-2030) ແລະ ຂຶ້ນແຜນຈັດກອງປະຊຸມ ແລກປ່ຽນແຜນງານດັ່ງກ່າວກັບພາກສ່ວນກ່ຽວຂ້ອງ ພ້ອມທັງສັງລວມລາຍງານການສ້າງແຜນດຳເນີນງານດັ່ງກາວ ເພື່ອສະເໜີການນຳພິຈາລະນາຮັບຮອງ;
2. ສຳເລັດການຜະລິດສິ່ງພິມເປັນຕົ້ນ: ຖົງ, ຈອກ ແລະ ເສື້ອ ເພື່ອຮັບໃຊ້ໃນວັນສິ່ງແວດລ້ອມໂລກ ແລະ ວັນປູກຕົ້ນໄມ້ແຫ່ງຊາດ ແລະ ຍັງໄດ້ຂຶ້ນແຜນຈັດພິມ ແຜ່ນພັບ, ປະຕິທິນ, ວາລະສານ ທີ່ເປັນການໂຄສະນາຜົນງານຂອງກອງທຶນ. ພ້ອມນັ້ນ, ໄດ້ເຂົ້າຮ່ວມການວາງສະແດງຜົນງານການເຄື່ອນ ໄຫວ ຂອງກອງທຶນ ແລະ ການປະຕິບັດກິດຈະກຳຂອງໂຄງການຕ່າງໆທີ່ໄດຮັບທຶນຈາກກອງທຶນ ໃນກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດວຽກງານຂອງຂະແໜງ ຊສ ປະຈຳປີ 2024 ແລະ ທິດທາງແຜນການ 2025 ແລະ ງານວັນສິ່ງແວດລ້ອມໂລກ ແລະ ວັນສິ່ງແວດລ້ອມແຫ່ງຊາດ ທີ່ແຂວງສະຫວັນນະເຂດ. ນອກນັ້ນ, ກໍໄດ້ໂຄສະນາ ເຜີຍແຜ່ອອກບົດຂ່າວການເຄື່ອນໄຫວຂອງ ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ແລະ ກິດຈະກຳຂອງບັນດາໂຄງການຍ່ອຍ ຜ່ານເວັບໄຊ ຈຳນວນ 25 ຄັ້ງ, ເຟດບຸກ, ຈຳນວນ55 ຄັ້ງ ແລະ ຕິດກະດ່າວຂ່າວ ຈຳນວນ 52 ຄັ້ງ ແລະ ການເຄື່ອນໄຫວກຸ່ມ ກສປ ຈຳນວນຫຼາຍຄັ້ງ, ເຂົ້າຮ່ວມຕັ້ງບູດງານວາງສະແດງກອງປະຊຸມ, ຂຶ້ນແຜນຈັດຊື້ອຸປະກອນ, ອອກແບບເສື້ອ, ກະເປົ໋າ, ຈອກນ້ຳ, ປະຕິທິນປະຈຳປີ ຂອງ ກສປ ແລະ ສິ່ງພິມຕ່າງໆ;
3. ສຳເລັດກອງປະຊຸມເຜີຍແຜ່ ລະບຽບການຄຸ້ມຄອງ ແລະ ຄູ່ມືຕ່າງ ທີ່ໄດ້ຮັບຮອງຈາກສະພາບໍລິຫານ ໃຫ້ໂຄງການທີ່ໄດ້ຮັບທຶນພາຍໃນ ມີຜູ້ເຂົ້າຮ່ວມ 65 ຄົນ ຈາກ 13 ໂຄງການ 10 ພາກສ່ວນຄື: ກົມສິ່ງແວດລ້ອມ, ກົມທີ່ດິນ, ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ພະແນກກະສິກຳ ແລະ ປ່າໄມ້ ແຂວງໄຊຍະບຸລີ, ຜົ້ງສາລີ, ຄຳມ່ວນ ແລະ ຫຼວງພະບາງ, ພຊສ ແຂວງຊຽງຂວາງ, ໄຊຍະບຸລີ, ຫຊສ ເມືອງປາກອຸ ແຂວງຫຼວງພະບາງ, ເມືອງສີງ ແຂວງຫຼວງນ້ຳທາ ແລະ ເມືອງຮົ່ມ ແຂວງໄຊສົມບຸນ.

2.8.ດ້ານການແກ້ໄຂຜົນການກວດສອບ: ***ສືບຕໍ່ແກ້ໄຂໃຫ້ຂາດຕົວບັນດາຄຳເຫັນຂອງຄະນະກວດສອບພາຍໃນ ແລະ ພາຍນອກ ສຳລັບປີຜ່ານມາ ພ້ອມທັງປັບປຸງລະບົບການຄຸ້ມຄອງການເງິນໃຫ້ມີຄວາມເຂັ້ມແຂງ ເພື່ອຫຼີກລ້ຽງບັນຫາເກົ່າບໍ່ໃຫ້ເກີດຂຶ້ນ ແລະ ຫຼຸດຜ່ອນບັນ ຫາໃໝ່ທີ່ຈະກວດພົບໃນການກວດສອບຄັ້ງຕໍ່ໄປ ໂດຍການສືບຕໍ່ລົງຕິດຕາມ ແລະ ຊຸກຍູ້ການຂຶ້ນແຜນກິດຈະກຳ, ຈັດຕັ້ງປະຕິບັດ ແລະ ການສະຫຼຸບສະສາງງົບປະມານ ໃຫ້ຖືກ ຕ້ອງຕາມລະບຽບການວາງອອກ***

ສຳເລັດການສ້າງແຜນດຳເນີນງານເພື່ອແກ້ໄຂຜົນການກວດສອບປະຈຳປີ ແລະ ໄດ້ແຕ່ງຕັ້ງຄະນະຮັບຜິດຊອບແກ້ໄຂຄຳເຫັນຂອງກວດສອບ ແລະ ຮັບຜິດຊອບໃນການສະໜອງຂໍ້ມູນ, ເຮັດວຽກກັບອົງການກວດສອບແຫ່ງລັດ ແລະ ບໍລິສັດກວດສອບບັນຊີພາຍນອກ. ພ້ອມນັ້ນ, ຍັງໄດ້ແຈ້ງຜົນການ

ກວດສອບປະຈຳປີ ໃຫ້ບັນດາໂຄງການທຶນພາຍໃນ ແລະ ທຶນສາກົນ ຮັບຊາບ ພ້ອມທັງແນະນຳວິທີການແກ້ໄຂບັນຫາທີ່ກວດສອບມີຄຳເຫັນ ໃນເວລາລົງຊຸກຍູ້. ນອກນີ້, ຫ້ອງການກອງທຶນ ຍັງໄດ້ສືບຕໍ່ຈັດຕັ້ງປະຕິບັດບັນດາໜ້າວຽກຈຸດສຸມຕ່າງໆ ຕາມແຜນການທີ່ກຳນົດໄວ້ ດັ່ງນີ້:

1. ໄດ້ຕິດຕາມ ແລະ ຊຸກຍູ້ ພ້ອມທັງອອກແຈ້ງການທອງ ກ່ຽວກັບການຊຳລະຕຶ້ນທຶນ ແລະ ດອກເບ້ຍໂຄງການເງິນກູ້ ຊຶ່ງໃນນີ້ສາມາດປິດໂຄງການສັນຍາເງິນກູ້ ໄດ້ 2 ສັນຍາຄື: ໂຄງການບຳບັດສິ່ງເສດເຫຼືອສ່ວນບຸກຄົນ ບ້ານຊາງ, ເມືອງນ້ຳບາກ, ແຂວງຫຼວງພະບາງ ແລະ ໂຄງການກອງທຶນບ້ານຫີນໂງ່ນ ເມືອງ ວຽງທອງ ແຂວງ ບໍລິຄຳໄຊ ລວມເປັນເງິນທັງໝົດ 168,750,000 ກີບ ແລະ ໄດ້ມອບໃບຕາດິນທີ່ໄດ້ເອົາມາຄ້ຳປະກັນຄືນໃຫ້ເຈົ້າຂອງ;
2. ປະສານສົມທົບພາກສ່ວນທີ່ກ່ຽວຂ້ອງ ເພື່ອຕິດຕາມຄວາມຄືບໜ້າ ໃນການດຳເນີນຂະບວນການຍຸຕິທຳ ໂຄງການເງິນກູ້ 2 ສັນຍາ ຂອງທ່ານ ດາວເພັດ ອຸລາວົງ ຄື: ໂຄງການໂຮງງານ ສຸກປະເສີດແຍກຂີ້ເຫຍື້ອຍ ມີຍອດຄ້າງ ຈຳນວນ 0.39 ຕື້ກີບ ແລະ ໂຄງການບໍລິສັດຄັດແຍກຂີ້ເຫຍື້ອ ມີຍອດຄ້າງ ຈຳນວນເງິນ 1.6 ຕື້ກີບ ເພື່ອໃຫ້ສາມາດປ່ຽນຫຼັກຊັບຄ້ຳປະກັນ ມາຈ່າຍຄືນຍອດຄ້າງຕາມສັນຍາ ຊຶ່ງມາເຖິງປະຈຸບັນແມ່ນຍັງບໍ່ໄດ້ຮັບຄຳຕອບຈາກພາກສ່ວນທີ່ກ່ຽວຂ້ອງ;
3. ອອກແຈ້ງການສະບັບເລກທີ 686/ກປສ.ຫກ, ລົງວັນທີ 15 ພຶດສະພາ 2025 ກ່ຽວກັບສິ້ນສຸດການປະກາດຂາຍຫຼັກຊັບ (ທີ່ດິນ) ນຳສົ່ງໃຫ້ຄອບຄົວຂອງຜູ້ກູ້ເງິນ ແລະ ອຳນາດການປົກຄອງບ້ານດົງໂພນເລົ່າ, ເມືອງຫາດຊາຍຟອງ ເພື່ອກະກຽມດຳເນີນຂະບວນການຍຸຕິທຳ ຕາມບົດບັນທຶກ ຕໍ່ໂຄງການ 2 ສັນຍາ ຂອງທ່ານ ວິລັດ ລາວັນພອນ ຄື: ໂຄງການຟາມຮຸ່ງເຮືອງ ມີຍອດຄ້າງ ຈຳນວນ 0.40 ຕື້ກີບ ແລະ ໂຄງການຟາມຮຸ່ງ ເຮືອງ ມີຍອດຄ້າງ ຈຳນວນ 0.48 ຕື້ກີບ;
4. ດຳເນີນການສັງລວມຂໍ້ມູນຕ່າງໆທີ່ຕິດພັນກັບວຽກງານກວດສອບ ເພື່ອສະໜອງໃຫ້ແກ່ຄະນະກວດກາພາຍໃນ ເພື່ອຈັດຕັ້ງປະຕິບັດການກວດກາພາຍໃນ ກປສ ຕາມພາລະບົດບາດ ແລະ ຊ່ວຍໃຫ້ຄຳແນະນຳໃນການແກ້ໄຂຜົນການກວດສອບ ປະຈຳປີ 2023 ແລະ ທຸກໆປີທີ່ຕິດພັນກັບ ກປສ;
5. ສຳເລັດຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບການເຮັດວຽກຮ່ວມກັບອົງການກວດສອບແຫ່ງລັດ ສະບັບເລກທີ 201/ກປສ.ຫກ, ລົງວັນທີ 25 ກຸມພາ 2025 ເພື່ອກະກຽມຄວາມພ້ອມໃນການສະໜອງຂໍ້ມູນໃຫ້ອົງການກວດສອບແຫ່ງລັດ ແລະ ກວດສອບພາຍນອກ.

3. ຕີລາຄາດ້ານດີ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້

3.1 ດ້ານດີ

- ການສະໜອງທຶນ ຂອງ ກປສ ໄດ້ເປີດໂອກາດໃຫ້ຫຼາຍພາກສ່ວນສະເໜີໂຄງການມາຂໍທຶນ ເພື່ອປະກອບສ່ວນເຂົ້າໃນວຽກງານທີ່ຕິດພັນກັບການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຜ່ານກົນໄກການສະໜອງທຶນ ຕາມ 7 ຮ່ວງທຶນ;
- ໂຄງການພັດທະນາຈຳນວນຫຼາຍມີຄວາມເປັນເຈົ້າການ ປະກອບສ່ວນພັນທະສິ່ງແວດລ້ອມ ເຂົ້າກອງທຶນເປັນປົກກະຕິ ຊຶ່ງເຮັດໃຫ້ມີລາຍຮັບເພີ່ມຂຶ້ນ;
- ໄດ້ຮັບສະໜັບສະໜຸນຈາກຈາກຄູ່ຮ່ວມງານເປັນຕົ້ນ: ກະຊວງໂຍທາທິການ ແລະ ຂົນສົ່ງ, ທະນາຄານໂລກ , GCF, GIZ, ຂະແໜງການທີ່ກ່ຽວຂ້ອງ, ອົງການຈັດຕັ້ງພາກລັດ ແລະ ສາກົນ ໃນການຈັດຕັ້ງປະ ຕິບັດໂຄງການ ພາຍໃຕ້ການຄຸ້ມຄອງຂອງກອງທຶນ ແລະ ການສ້າງຄວາມເຂັ້ມແຂງ ແລະ ກະກຽມຄວາມພ້ອມໃຫ້ກອງທຶນ ກາຍເປັນອົງກອນທີ່ສາມາດ ເຂົ້າເຖິງແຫຼ່ງທຶນສາກົນໄດ້ໂດຍກົງ ຂອງກອງທຶນ GCF;
- ໄດ້ຮັບການຮ່ວມມືຈາກພາກລັດ ແລະ ເອກະຊົນ ໃນການຈັດຕັ້ງປະຕິບັດວຽກງານການປຸກຈິດສຳນຶກ ແລະ ໂຄສະນາເຜີຍແຜ່ ບັນດານິຕິກຳທີ່ພົວພັນກັບວຽກງານ ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ

ສິ່ງແວດລ້ອມ ຜ່ານສື່ຕ່າງໆ ເປັນປົກກະຕິ ແລະ ຕໍ່ເນື່ອງ ເຮັດໃຫ້ຂໍ້ມູນຂ່າວສານໄດ້ຖືກເຜີຍແຜ່ຢ່າງກວ້າງຂວາງ.

3.2 ຂໍ້ຄົງຄ້າງ

- ການຈັດສັນງົບປະມານໃນກິດຈະກຳຂອງໂຄງການຍ່ອຍ (ທຶນພາຍໃນ) ເປັນຕົ້ນ: ແຜນຈັດຊື້-ຈັດຈ້າງ, ກອງປະຊຸມ, ຝຶກອົບຮົມ ແລະ ຕິດຕາມຕ່າງໆ ຍັງມີຄວາມຫຍຸ້ງຍາກ ເນື່ອງຈາກຜູ້ຮັບຜິດຊອບໂຄງການຍ່ອຍຈຳນວນໜຶ່ງ ຍັງບໍ່ເຂົ້າໃຈໃນການສ້າງແຜນ ແລະ ປະກອບເອກະສານໃນການຂໍຖອນງົບປະມານ;
- ການລະດົມທຶນສາທົນ (ຄ່ຽນເງິນ) ຍັງບໍ່ມີການເຄື່ອນໄຫວ ການນຳໃຊ້ງົບປະມານບໍ່ໄດ້ຕາມເຜດານທີ່ຈະສາມາດຄ່ຽນເງິນຕາມລະບຽບຂອງ ສາທົນໄດ້ ຈຶ່ງເຮັດໃຫ້ຕົວເລກລະດົມທຶນ ບໍ່ບັນລຸຄາດໝາຍ;
- ການສະໜຸບສະສາງລາຍຈ່າຍ ການນຳໃຊ້ງົບປະມານຕິດຕາມກວດກາວິຊາການດ້ານສິ່ງແວດລ້ອມ ແລະ ຄຸ້ມຄອງອ່າງຮັບນ້ຳ ບາງພາກສ່ວນຍັງບໍ່ເປັນເຈົ້າການໃນການສະໜຸບສະສາງ ແລະ ສິ່ງໃຫ້ກອງທຶນ ກວດກາຄວາມຖືກຕ້ອງ ໂດຍສະເພາະແມ່ນຂັ້ນທ້ອງຖິ່ນ.

3.3 ບົດຮຽນທີ່ຖອດຖອນໄດ້

- ຕ້ອງໄດ້ກຳນົດລະບຽບການພາຍໃນ ພ້ອມທັງປະຕິບັດວິໄນ ຕໍ່ບັນດາໂຄງການທີ່ຂາດຄວາມຮັບຜິດຊອບ ແລະ ບໍ່ນຳສົ່ງບົດສະໜຸບສະສາງງົບປະມານ, ບົດລາຍງານຜົນສຳເລັດ ແລະ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດກິດຈະກຳ ໃຫ້ກອງທຶນ;
- ຕ້ອງສ້າງກົນໄກໃນການຊຸກຍູ້ໂຄງການຍ່ອຍຂອງທຶນສາທົນ ໃຫ້ສາມາດຈັດຕັ້ງປະຕິບັດກິດຈະກຳໄດ້ຕາມແຜນການ ແລະ ປະຕິບັດງົບປະມານໄດ້ຕາມເຜດານທີ່ຜູ້ໃຫ້ທຶນກຳນົດ ເພື່ອສາມາດຄ່ຽນເງິນໄດ້ຕາມແຜນການທີ່ວາງໄວ້;
- ເພີ່ມທະວີການຕິດຕາມ, ຊຸກຍູ້ ແລະ ປະເມີນຜົນ ໄປຄຽງຄູ່ກັບການແນະນຳພະນັກງານໂຄງການທຶນພາຍໃນ, ທຶນສາທົນ ເພື່ອສ້າງຄວາມເຂົ້າໃຈ ໃນວຽກງານການຄຸ້ມຄອງໂຄງການ, ການຂຶ້ນແຜນງົບປະມານ-ກິດຈະກຳ ແລະ ສະໜຸບສະສາງລາຍຈ່າຍ ເປັນແຕ່ລະໄລຍະ ແລະ ຕໍ່ເນື່ອງ;
- ການສະໜອງທຶນ ແລະ ອະນຸມັດງົບປະມານ ຕ້ອງຮັບປະກັນໃຫ້ມີຄວາມວ່ອງໄວທັນກັບສະພາບການ ເພື່ອປະກອບເຂົ້າໃນການຈັດຕັ້ງປະຕິບັດວຽກງານສຳເລັດຕາມແຜນການ.

ພາກທີ II
ແຜນການເຄື່ອນໄຫວວຽກງານ ປະຈຳປີ 2026

1. ທິດທາງລວມ

ຫ້ອງການກອງທຶນປົກປັກຮັກສາວິ່ງແວດລ້ອມ ແລະ ປ່າໄມ້ ຈະໄດ້ສືບຕໍ່ສຸມໃສ່ ສ້າງຄວາມເຂັ້ມແຂງ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ວຽກງານການຄຸ້ມຄອງບໍລິຫານການເງິນສິ່ງແວດລ້ອມ ແລະ ປ່າໄມ້, ການຮ່ວມມື, ການສະໜອງທຶນ, ການລະດົມທຶນ ແລະ ການຄຸ້ມຄອງໂຄງການ ໂດຍມີການປະສານສົມທົບກັບພາກ ສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ, ທ້ອງຖິ່ນ ແລະ ສາທົນ ໃຫ້ມີຄວາມກົມກຽວ ພ້ອມທັງ ຫັນເປັນທັນສະໄໝ, ສ້າງພະນັກງານໃຫ້ມີຄວາມຊຳນິຊຳນານ ເພື່ອຍົກປະສິດທິພາບ ແລະ ປະສິດທິຜົນ ໃນການເປັນເສນາທິການ ໃຫ້ແກ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເພື່ອຊຸກຍູ້ ການຈັດຕັ້ງປະຕິບັດ ແຜນການ 5 ປີ ສົກປີ 2026-2030, ຍຸດທະສາດ 10 ປີ 2026-2035 ແລະ ວິໄສທັດຮອດ ປີ 2045 ຂອງ ຂະແໜງ ກະສິກຳ ແລະ ສິ່ງແວດລ້ອມ ໃຫ້ບັນ ລຸຕາມຄາດໝາຍ.

2. ຄາດໝາຍສຸ້ຊຸ ແລະ ວຽກຈຸດສຸມ

2.1 ຄາດໝາຍສຸ້ຊຸ

1) ສືບຕໍ່ຄົ້ນຄວ້າ ແລະ ປັບປຸງ ຍົກລະດັບການຈັດຕັ້ງ, ການຄຸ້ມຄອງ-ບໍລິຫານ ຢ່າງເປັນລະບົບ, ຮັບປະ ກັນ ມີລະບຽບການ ແລະ ຄູ່ມືດ້ານວິຊາການ ໃນການຄຸ້ມຄອງບໍລິຫານ ຢ່າງຄົບຊຸດ ສອດຄ່ອງກັບສະ ພາບ ຕົວຈິງ ແລະ ສາມາດຈັດຕັ້ງປະຕິບັດໄດ້;
2) ສືບຕໍ່ ສ້າງ ແລະ ພັດທະນາບຸກຄະລາກອນ ໃຫ້ມີຄວາມຮູ້, ຄວາມສາມາດ ແລະ ວິຊາສະເພາະ ແລະ ດ້ານອື່ນໆທີ່ກ່ຽວຂ້ອງ ໃຫ້ມີຄຸນນະພາບ ທຽບເທົ່າສາກົນ, ຍົກລະດັບ ໃຫ້ກາຍເປັນຊ່ຽວຊານ ສະເພາະ ໃນການຄຸ້ມຄອງໂຄງການ, ຄຸ້ມຄອງການເງິນ, ການຈັດຊື້-ຈັດຈ້າງ ແລະ ການຕິດຕາມ ແລະ ປະເມີນຜົນ (M&E) ໃຫ້ໄດ້ຢ່າງໜ່ອຍ 1 ທ່ານ;
3) ສືບຕໍ່ສູ້ຊົນ ໃຫ້ກາຍເປັນສະຖາບັນການເງິນ ແຫ່ງຊາດ ຂອງ ສປປ ລາວ ທີ່ສາມາດເຂົ້າເຖິງແຫຼ່ງທຶນສາ ກົນໄດ້ໂດຍກົງ (National Accredited Entity) ເພື່ອສາມາດຍາດແຍ່ງທຶນສາກົນ (GCF) ແລະ ທຶນ ສາກົນອື່ນໆ ເຂົ້າມາສະໜັບສະໜຸນວຽກງານ ຂອງ ຂະແໜງ ກະສິກຳ ແລະ ສິ່ງແວດລ້ອມ ຢູ່ ສປປ ລາວ ໃຫ້ໄດ້ຫຼາຍຂຶ້ນ;
4) ສູ້ຊົນລະດົມການເກັບລາຍຮັບ ໃນປີ 2026 ຈາກພາຍໃນ ແລະ ສາກົນ ໃຫ້ໄດ້ປະມານ 20.4 ລ້ານໂດລາ ໃນນີ້ປະກອບມີ ທຶນພາຍໃນ ຕາມແຫຼ່ງລາຍຮັບ ໃຫ້ໄດ້ປະມານ 9.4 ລ້ານໂດລາ ແລະ ທຶນສາກົນ ໃຫ້ ໄດ້ປະມານ 11 ລ້ານໂດລາສະຫະລັດ;
5) ສູ້ຊົນລະດົມທຶນ ໃນປີ 2026 ຈາກພາຍໃນ ແລະ ສາກົນ ໃຫ້ໄດ້ 11.3 ລ້ານໂດລາສະຫະລັດ. ໃນນີ້, ປະກອບມີ ລະດົມທຶນຈາກພາຍໃນ ຈຳນວນ 8.7 ລ້ານໂດລາສະຫະລັດ ແລະ ລະດົມທຶນຈາກສາກົນ ຈຳນວນ 2.6 ລ້ານໂດລາສະຫະລັດ;
6) ສູ້ຊົນ ອະນຸມັດເງິນ ສະສົມທຶນ ທີ່ໄດ້ຮັບຈາກ ການລະດົມທຶນດ້ານສິ່ງແວດລ້ອມ ໃນປີ 2025 ຈຳນວນ 30% ໄປເພີ່ມໃສ່ຕົ້ນທຶນເງິນຝາກ ຢູ່ທະນາຄານທຸລະກິດ ແລະ ກະກຽມ ແຜນຈັດສັນ ໃນການສະສົມ ທຶນ ທີ່ໄດ້ຮັບຈາກ ການລະດົມທຶນດ້ານສິ່ງແວດລ້ອມ ໃນປີ 2026 ຈຳນວນ 30% ໄປເພີ່ມໃສ່ຕົ້ນທຶນ ເງິນຝາກ ຢູ່ທະນາຄານທຸລະກິດ ໃນປີ 2027 ເພື່ອຮັບປະກັນຄວາມຍືນຍົງດ້ານການເງິນ ຂອງ ກອງທຶນ;
7) ສືບຕໍ່ຄົ້ນຄວ້າ ແລະ ປັບປຸງກົນໄກ ໃນການຊຸກຍູ້ ແລະ ຕິດຕາມ ໃນການເກັບລາຍຮັບຈາກການປະຕິ ບັດ ພັນທະດ້ານປ່າໄມ້ ໃນການຫັນປ່ຽນທີ່ດິນປ່າໄມ້ ທີ່ຕ້ອງປະຕິບັດພັນທະ ຈ່າຍຄ່າບໍລິການທາງດ້ານວິຊາ ການ, ຄ່າບໍລິການດ້ານລະບົບນິເວດປ່າໄມ້, ຄ່າທົດແທນຊີວະນາໆພັນ, ຄ່າປູກໄມ້ທົດແທນ ແລະ ຄ່າປັບ ໜ້າດິນຄືນ ໃຫ້ສາມາດປະຕິບັດໄດ້ຕາມມະຕິສະພາແຫ່ງຊາດ ກຳນົດໄວ້ຢ່າງຄົບຖ້ວນ;
8) ສູ້ຊົນສະໜອງທຶນໃຫ້ບັນດາໂຄງການທີ່ຈັດຕັ້ງປະຕິບັດຢູ່ ໃນປີ 2026 ຈາກທຶນພາຍໃນ ແລະ ທຶນສາກົນ ໃຫ້ໄດ້ 11.6 ລ້ານໂດລາ, ໃນນີ້ປະ ກອບມີ ສະໜອງທຶນພາຍໃຫ້ໂຄງການຍ່ອຍທີ່ຈັດຕັ້ງປະຕິບັດຢູ່ໃນ ດ້ານສິ່ງແວດລ້ອມ ພາຍໃຕ້ 8 ຮ່ວງທຶນ ໃຫ້ໄດ້ 0.6 ລ້ານໂດລາ ສຫລ ແລະ ສະໜອງທຶນສາກົນ 11 ລ້ານໂດລາ ສຫລ;
9) ສະໜອງທຶນໃຫ້ໂຄງການໃໝ່ ປີ 2026 ທຶນພາຍໃນ ແລະ ສາກົນ ຈຳນວນ 2.66 ລ້ານໂດລາສະຫະລັດ, ໃນນີ້ ສະ ໜອງທຶນພາຍໃນໃຫ້ໂຄງການໃໝ່ ຈຳນວນ 30 ຕື້ກີບ (ຫລື 1.38 ລ້ານໂດລາ ສະຫະລັດ) ແລະ ທຶນສາກົນ ຈຳນວນ 1.28 ລ້ານໂດລາສະຫະລັດ;
10) ສູ້ຊົນຈັດຕັ້ງປະຕິບັດ ແຜນລາຍຈ່າຍງົບປະມານ ແຫຼ່ງທຶນດ້ານປ່າໄມ້ ເຂົ້າໃນວຽກງານບູລິມາສິດ ຈຳນວນ 10.2 ຕື້ກີບ. ໃນນີ້ການຄຸ້ມຄອງປ່າໄມ້ ແລະ ເຄື່ອງປ່າຂອງດົງ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນ ປີ 2026 ໃຫ້ໄດ້ 5.5 ຕື້ກີບ ຫຼືທຽບເທົ່າ 0.25 ລ້ານໂດລາສະຫະລັດ ແລະ ພ້ອມທັງສູ້ຊົນເບີກຈ່າຍ ງົບປະມານ ທີ່ໄດ້ຮັບຈາກການປະຕິບັດພັນ ທະດ້ານປ່າໄມ້ ໃນການຫັນປ່ຽນທີ່ດິນປ່າໄມ້ ເຂົ້າໃນວຽກ ງານຟື້ນຟູປ່າ, ປູກປ່າທົດແທນ, ຟື້ນຟູຊີວະນາໆພັນ ແລະ ຟື້ນຟ ລະບົບນິເວດປ່າໄມ້ ໃຫ້ບັນລຸຕາມຄາດ ໝາຍ 4.7 ຕື້ກີບ ຫຼືທຽບເທົ່າ 0.26 ລ້ານໂດລາສະຫະລັດ;

11) ຍົກລະດັບການຄຸ້ມຄອງ, ຕິດຕາມ ແລະ ປະເມີນຜົນໂຄງການ ທີ່ໄດ້ຮັບງົບປະມານ ຈາກກອງທຶນ ແລະ ໂຄງການສາກົນ, ຄູ່ຮ່ວມງານ ໃຫ້ມີລະບົບລວມສູນປະຖຸດຽວ ແລະ ທັນເປັນທັນສະໄໝ ເພື່ອຮັບ ປະກັນ ການນຳໃຊ້ທຶນ ໃຫ້ປະໂຫຍດສູງສຸດ ສ່ອດຄ່ອງລະບຽບຫຼັກການ ແລະ ການປະຕິບັດໂຄງການ ໃຫ້ບັນລຸ ຄາດໝາຍ;

12) ສືບຕໍ່ຈັດຕັ້ງປະຕິບັດ ວຽກງານຮ່ວມມື ສອງຝ່າຍ-ຫຼາຍຝ່າຍ ກັບຄູ່ຮ່ວມງານ ທີ່ມີຢູ່ ພ້ອມທັງເສີມຂະ ຫຍາຍ ສ້າງເຄືອຂ່າຍການຮ່ວມມືໃໝ່ ເພື່ອເຊື່ອມໂຍງ ພາກພື້ນ ແລະ ສາກົນ ໃນການແລກປ່ຽນບົດ ຮຽນ, ແລກປ່ຽນຂໍ້ມູນຂ່າວສານ ແລະ ລະດົມທຶນ ໃນການສະໜັບສະໜຸນ ການເຄື່ອນໄຫວວຽກງານ ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້.

2.2 ໜ້າວຽກຈຸດສຸມ

2.1.1 ດ້ານການຈັດຕັ້ງ ແລະ ບຸກຄະລາກອນ

1) ຄົ້ນຄວ້າ ແລະ ປັບປຸງ ໃນການກຳນົດ ພາລະບົດບາດ, ໜ້າທີ່ ແລະ ແບ່ງຄວາມຮັບຜິດຊອບ ໃຫ້ແຕ່ລະ ຂະແໜງ ພາຍໃນ ໃຫ້ມີຄວາມຊັດເຈນ ພ້ອມທັງປັບປຸງລະບຽບໃນການເຮັດວຽກໃຫ້ມີຄວາມຄ່ອງຕົວ ຫຼາຍຂຶ້ນ, ເຮັດໃຫ້ໄວ ແລະ ໂປ່ງໃສ ແນ່ໃສ່ຮັບປະກັນ ໃນການສ້າງຫ້ອງການກອງທຶນ ໃຫ້ເປັນອົງກອນ ແຫ່ງຊາດທີ່ສາມາດເຂົ້າເຖິງແຫຼ່ງທຶນສາກົນໄດ້ໂດຍກົງ;

2) ເອົາໃຈໃສ່ປັບປຸງ ການກຳນົດຕຳແໜ່ງງານ ໃຫ້ມີຄວາມພ້ອມ ໃນການຈັດຕັ້ງປະຕິບັດ ພາລະບົດ ແລະ ໜ້າທີ່ ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ພ້ອມທັງປັບປຸງ, ຊັບຊ້ອນ, ເລືອກເຟັ້ນ ພະນັກງານ ຜູ້ທີ່ມີຄວາມຮູ້ ແລະ ຄວາມສາມາດ ບັນຈຸເຂົ້າຕາມຕຳແໜ່ງງານໃຫ້ມີຄວາມສົມດຸນ ພຽງພໍຕໍ່ ກັບຄວາມຕ້ອງການຂັ້ນພື້ນຖານ;

3) ສຳມະນາ ແລະ ແລກປ່ຽນຄຳເຫັນ ຕໍ່ກັບພາບລວມ, ກົງຈັກການຈັດຕັ້ງ, ພາລະບົບບາດ ຂອງຂະແໜງ ຕ່າງໆ, ລະບຽບການຄຸ້ມຄອງພະນັກງານ ແລະ ນະໂຍບາຍຕ່າງໆ ຂອງກອງທຶນ ໃຫ້ກັບພະນັກງານໃໝ່ ແລະ ເກົ່າ ຢ່າງໜ້ອຍ 2 ຄັ້ງຕໍ່ປີ;

4) ສ້າງ ແລະ ຈັດຕັ້ງປະຕິບັດ ແຜນພັດທະນາຊັບພະຍາກອນມະນຸດ ໄລຍະສັ້ນ ແລະ ໄລຍະຍາວ ຂອງ ກອງ ທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ຍົກລະດັບ ພະນັກງານ ຫ້ອງການກອງທຶນ ທຽບເທົ່າສາກົນ ແລະ ກາຍເປັນຊ່ຽວຊານສະເພາະດ້ານ;

5) ຈັດຕັ້ງປະຕິບັດແຜນການຝຶກອົບຮົມ ພາຍໃນ ແລະ ຕ່າງປະເທດ ພ້ອມດ້ວຍ ກະກຽມແຜນງົບປະມານ ໃນການເຂົ້າຮ່ວມ ແລະ ຈັດຝຶກອົບຮົມ ທາງດ້ານວິຊາສະເພາະ ໃນແຕ່ລະຂົງເຂດວຽກງານ. ພ້ອມທັງສ້າງ ລະບົບ ຕິດຕາມ ແລະ ປະເມີນຜົນ ທາງດ້ານມາດຖານ ການຈັດຕັ້ງປະຕິບັດວຽກງານ ຂອງ ພະນັກ ງານ ຜູ້ທີ່ໄດ້ຮັບການຝຶກອົບຮົມ.

2.1.2 ດ້ານການລະດົມທຶນ, ສະສົມທຶນ ແລະ ເກັບລາຍຮັບ

1) ສືບຕໍ່ເກັບກຳຂໍ້ມູນ ແລະ ປະເມີນ ສັງລວມ ບັນດາໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ມີການ ປະກອບສ່ວນພັນທະ ໃນການປົກປັກຮັກສາສິ່ງແວດລ້ອມ ຕາມສັນຍາສຳປະທານ ໃນໄລຍະຜ່ານມາ ເພື່ອເປັນບ່ອນອີງສ້າງແຜນການລະດົມທຶນ ຈາກແຫຼ່ງທຶນ, ຕາມແຫຼ່ງລາຍຮັບ ດ້ານສິ່ງແວດລ້ອມ ໃນ ປີ 2026 ໃຫ້ບັນລຸ 6,8 ລ້ານໂດລາ ສຫລ ແລະ ແຫລ່ງທຶນສາກົນໃຫ້ ບັນລຸ 2.5 ລ້ານໂດລາສະຫະລັດ;

2) ຄົ້ນຄວ້າ ແລະ ແລກປ່ຽນບົດຮຽນ ພາຍໃນ ແລະ ຕ່າງປະເທດ ເພື່ອສ້າງກົນໄກໃໝ່ ແລະ ນິຕິກຳລຸ່ມກົດ ໝາຍ ເພື່ອເປັນບ່ອນອີງ ໃນການຈັດຕັ້ງປະຕິບັດແຫຼ່ງລາຍຮັບ ທີ່ຍັງບໍ່ທັນໄດ້ຈັດຕັ້ງປະຕິບັດຜ່ານມາ ເປັນຕົ້ນ: ຄ່າບຸລະນະຟື້ນຟູສິ່ງແວດລ້ອມ ຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ, ຄ່າບໍລິການລະ ບົບນິເວດ ແລະ ລາຍຮັບຈາກການຂາຍສິນເຊື່ອກາກບອນ;

3) ຈັດສັນແບ່ງປັນ ລາຍຮັບດ້ານສິ່ງແວດລ້ອມ ໃນແຕ່ລະປີ ຈຳນວນ 30% ເຂົ້າໄປເພີ່ມໃສ່ ທຶນເງິນຝາກ ຢູ່ທະນາຄານທຸລະກິດ ໃຫ້ໄດ້ປະມານ 2.8 ລ້ານໂດລາສະຫະລັດ ເພື່ອຮັບປະກັນຄວາມຍືນຍົງດ້ານການເງິນ ຂອງ ກອງທຶນ;
4) ສະເໜີ ສະພາບໍລິຫານ ກອງທຶນ ອະນຸມັດເງິນ ສະສົມທຶນ ທີ່ໄດ້ຮັບຈາກ ການລະດົມທຶນດ້ານສິ່ງແວດລ້ອມ ໃນປີ 2025 ຈຳນວນ 30% ໄປເພີ່ມໃສ່ຕົ້ນທຶນເງິນຝາກ ຢູ່ທະນາຄານທຸລະກິດ ເພື່ອຮັບປະກັນຄວາມຍືນຍົງດ້ານການເງິນ ຂອງ ກອງທຶນ;
5) ສືບຕໍ່ຕິດຕາມ ແລະ ຊຸກຍູ້ ການປະກອບສ່ວນ ຕາມພັນທະໃນການປົກປັກຮັກສາສິ່ງແວດລ້ອມ ຕາມສັນຍາສຳປະທານ (ພະລັງງານ, ບໍ່ແຮ່, ໂຄງລ່າງພື້ນຖານກະສິກຳ-ປ່າໄມ້, ອຸດສະຫະກຳ-ການຄ້າ) ໃຫ້ບັນລຸຄາດໝາຍແຜນການປີ ຢ່າງໜ້ອຍ 80% ຂອງແຜນການ ພ້ອມທັງແລກປຽນຂໍ້ມູນແຕ່ລະພາກສ່ວນຢ່າງເປັນປົກກະຕິ;
6) ສ້າງຖານຂໍ້ມູນ ແລະ ທັນເປັນທັນສະໄໝ ໃນການຕິດຕາມ ການປະກອບສ່ວນພັນທະ ໃນການປົກປັກຮັກສາສິ່ງແວດລ້ອມ ຕາມສັນຍາສຳປະທານ (ພະລັງງານ, ບໍ່ແຮ່, ໂຄງລ່າງພື້ນຖານກະສິກຳ-ປ່າໄມ້, ອຸດສະຫະກຳ-ການຄ້າ) ຮ່ວມກັບ ກະຊວງ ການເງິນ, ກະຊວງ ອຸດສາຫະກຳ ແລະ ການຄ້າ ແລະ ຄະນະກຳມະການ ສົ່ງເສີມການລົງທຶນ;
7) ເກັບກຳຂໍ້ມູນ ແລະ ປຶກສາຫາລືແລກປ່ຽນ ໃນການພັດທະນາປົດສະເໜີໂຄງການ ເພື່ອສະເໜີຂໍທຶນສາກົນ ເປັນຕົ້ນ: WB, UNDP, GIZ, UNEP, FAO ແລະ GGGI ເພື່ອມາຈັດຕັ້ງປະຕິບັດໃນຂົງເຂດວຽກງານ ປົກປັກຮັກສາປ່າໄມ້, ຊີວະນາໆພັນ, ລະບົບນິເວດສິ່ງແວດລ້ອມ, ລະບົບນິເວດປ່າໄມ້ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນປີ 2026 ໃຫ້ໄດ້ 2.5 ລ້ານໂດລາ ສຫລ (WB 1.28 ລ້ານໂດລາ ສຫລ, EU 0.3 ລ້ານໂດລາ ສຫລ, RPSP-GCF 1 ລ້ານໂດລາ ສຫລ) ;
8) ເກັບກຳຂໍ້ມູນ ແລະ ປັບປຸງ ກົນໄກການປະສານງານ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ໃນການເກັບລາຍຮັບ ຕາມແຫຼ່ງລາຍຮັບຕ່າງໆ ຂອງກອງທຶນ ທັງພາຍໃນ ແລະ ສາກົນ ໃຫ້ບັນລຸ 20.45 ລ້ານໂດລາສະຫະລັດ ເປັນຕົ້ນ: ລາຍຮັບ ຈາກເຄື່ອງປ່າຂອງດົງ, ພັນທະປຸກໄມ້, ຄ່າປູກປ່າທົດແທນ ແລະ ຈາກການຂາຍໄມ້ ແລະ ເຄື່ອງປ່າຂອງດົງ ທີ່ຮິບເປັນຂອງລັດ, ພັນທະດ້ານສິ່ງແວດລ້ອມ ດອກເບ້ຍເງິນຝາກປະຈຳ, ງົບປະມານຕິດຕາມກວດກາສິ່ງແວດລ້ອມ ແລະ ອ່າງຮັບນ້ຳ ເພື່ອສ້າງເປັນແຜນຄາດຄະເນລາຍຮັບ ປີ 2026 ຄາດໝາຍ ໃຫ້ບັນລຸ 200 ຕື້ກວ່າກີບ ຫຼືທຽບເທົ່າ 9.4 ລ້ານໂດລາ ສຫລ ແລະ ຈາກທຶນສາກົນ ໃຫ້ບັນລຸ 11 ລ້ານໂດລາສະຫະລັດ. ໃນນີ້ ປະກອບມີ:

❖ **<u>ທຶນພາຍໃນ :</u>** ໃຫ້ບັນລຸ 200 ຕື້ກວ່າກີບ ຫຼືທຽບເທົ່າ 9.4 ລ້ານໂດລາ ສຫລ.

- ລາຍຮັບຕົ້ນທຶນດອກເບ້ຍເງິນຝາກປະຈຳ ແລະ ໂຄງການເງິນກູ້ ຈຳນວນ 14.4 ຕື້ກວ່າກີບ ຫຼື 0.66 ລ້ານໂດລາສະຫະລັດ;
- ລາຍຮັບຈາກການປະກອບສ່ວນພັນທະດ້ານສິ່ງແວດລ້ອມ ຈຳນວນ 3.1 ລ້ານໂດລາສະຫະລັດ;
- ລາຍຮັບຈາກພັນທະດ້ານປ່າໄມ້ ຈຳນວນ 27 ຕື້ກວ່າກີບ ຫລື 1.27 ລ້ານໂດລາສະຫະລັດ (ເຄື່ອງປ່າຂອງດົງ 10 ຕື້ກວ່າກີບ, ຈາກມະຕິຄະນະປະຈຳສະພາ 17 ຕື້ກວ່າກີບ);
- ແລະ ລາຍຮັບຈາກ ງົບປະມານຕິດຕາມກວດກາສິ່ງແວດລ້ອມ ແລະ ອ່າງຮັບນ້ຳ ຈຳນວນ 4.3 ລ້ານໂດລາສະຫະລັດ.

❖ **<u>ທຶນສາກົນ:</u>** ໃຫ້ບັນລຸ 11 ລ້ານໂດລາສະຫະລັດ.

- ລາຍຮັບຈາກ ໂຄງການ LLL ຈຳນວນ 1.89 ລ້ານໂດລາສະຫະລັດ;
- ລາຍຮັບຈາກ ໂຄງການ UNEP ຈຳນວນ 1.21 ລ້ານໂດລາສະຫະລັດ;

- ລາຍຮັບຈາກ ໂຄງການ SU-I-GFLM ຈຳນວນ 6.63 ລ້ານໂດລາສະຫະລັດ;
- ລາຍຮັບຈາກ ໂຄງການ PWMP ຈຳນວນ 1.28 ລ້ານໂດລາສະຫະລັດ.

9) ຄົ້ນຄວ້າ ແລະ ແລກປ່ຽນບົດຮຽນ ພາຍໃນ ແລະ ຕ່າງປະເທດ ເພື່ອສ້າງກົນໄກ ໃໝ່ ແລະ ນິຕິກຳລຸ່ມກົດໝາຍ ເພື່ອເປັນບ່ອນອີງ ໃນການຈັດຕັ້ງປະຕິບັດແຫຼ່ງລາຍຮັບ ທີ່ຍັງບໍ່ທັນໄດ້ຈັດຕັ້ງປະຕິບັດຜ່ານມາ ເປັນຕົ້ນ:ລາຍຮັບຈາກການດຳເນີນກິດຈະການທ່ອງທ່ຽວທາງທຳມະຊາດ ແລະ ອື່ນໆ; ການຄ້າຂາຍການບອນປ່າໄມ້, ການຈ່າຍຄ່າບໍລິການລະບົບນິເວດປ່າໄມ້;
10) ດຳເນີນການສະເໜີ ຍ້ອງຍໍ ແລະ ຊຸມເຊີຍ ໃນແຕ່ລະຂັ້ນ ຜ່ານສື່ໂຄສະນາ ໃຫ້ບັນດາໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ປະກອບສ່ວນທຶນເຂົ້າ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຕາມພັນທະສັນຍາຕ່າງໆ ຢ່າງເປັນປົກກະຕິຕໍ່ເນື່ອງ.

2.1.3 ດ້ານການສະໜອງທຶນ ແລະ ການປະຕິບັດລາຍຈ່າຍ

➢ **<u>ດ້ານການສະໜອງທຶນ</u>**

1) ປັບປຸງແບບຟອມບົດສະເໜີໂຄງການຍ່ອຍ ທີ່ຈະສະເໜີຂໍທຶນພາຍໃນດ້ານສິ່ງແວດລ້ອມ ໃຫ້ມີຄວາມເຂົ້າໃຈງ່າຍ ແລະ ສອດຄ່ອງກັບສະພາບຕົວຈິງໄລຍະໃໝ່, ພ້ອມທັງປັບປຸງ ກົນໄກ ແລະ ຂັ້ນຕອນອະນຸມັດ ການສະໜອງທຶນ ຕາມ 8 ຮ່ວງທຶນ ໃຫ້ວ່ອງໄວ ເພື່ອທັນກັບສະພາບຄວາມຕ້ອງການໃນການນຳໃຊ້ທຶນ;
2) ເກັບກຳຂໍ້ມູນແຜນຄວາມຕ້ອງການທຶນ ຂອງແຕ່ລະພາກສ່ວນ ພາຍໃນຂະແໜງ ກະສິກຳ ແລະ ສິ່ງ ແວດລ້ອມ ແລະ ຂະແໜງການອື່ນໆປິ່ນອ້ອມ ທີ່ຈະນຳໃຊ້ເຂົ້າໃນວຽກງານປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອເປັນບ່ອນອີງໃນການກຳນົດກອບວຽກບຸລິມະສິດ ຂອງ ແຜນສະໜອງທຶນ ພາຍໃນດ້ານສິ່ງແວດລ້ອມ ໄປຕາມ 8 ຮ່ວງທຶນ ໃຫ້ໄດ້ 1.38 ລ້ານໂດລາ ສຫລ ໃນປີ 2026;
3) ເຜີຍແຜ່ ແລະ ໂຄສະນາແຜນສະໜອງທຶນ ພາຍໃນດ້ານສິ່ງແວດລ້ອມ ໃຫ້ສູນກາງ ແລະ ທ້ອງຖິ່ນ ຂົງເຂດບຸລິມະສິດ ຢ່າງໜ່ອຍ 2 ຄັ້ງຕໍ່ປີ; ພ້ອມທັງສ້າງຄວາມເຂັ້ມແຂງ ໃຫ້ສູນກາງ ແລະ ທ້ອງຖິ່ນ ຂອງແຕ່ລະຂະແໜງການ ໃນການຂຽນບົດສະເໜີໂຄງການຍ່ອຍ ຂໍທຶນພາຍໃນດ້ານສິ່ງແວດລ້ອມ ຂອງ ກອງທຶນ ຕາມ 8 ຮ່ວງທຶນ ຢ່າງໜ່ອຍ 2 ຄັ້ງຕໍ່ປີ;
4) ຄົ້ນຄວ້າ ແລະ ປະກອບເຫັນ ຕໍ່ກັບ ບົດສະເໜີໂຄງການຍ່ອຍທຶນພາຍໃນ ດ້ານສິ່ງແວດລ້ອມ ຕາມ 8 ຮ່ວງທຶນ ຂອງກອງທຶນ ຢ່າງເປັນປົກກະຕິ ແລະ ຮັບປະກັນຄວາມວ່ອງໄວ, ພ້ອມທັງນຳສະເໜີ ຄະນະວິຊາການ ຂອງ ກອງທຶນ ພິຈາລະນາ ປະເມີນໃຫ້ຄະແນນ ທາງດ້ານຫຼັກການ ຢ່າງໜ່ອຍ 2 ຄັ້ງຕໍ່ປີ.

➢ **<u>ດ້ານການປະຕິບັດລາຍຈ່າຍ</u>**

1) ປະສານສົມທົບ ກັບບັນດາຂະແໜງການອ້ອມຂ້າງ ທັງສູນກາງ ແລະ ທ້ອງຖິ່ນ ເພື່ອຄາດຄະເນບັນດາກິດຈະກຳ ແລະ ງົບປະມານ ໃນການປະຕິບັດລາຍຈ່າຍ ປີ 2026 ໃຫ້ບັນລຸ 13.2 ລ້ານໂດລາສະຫະລັດ ຫຼື ປະມານ 287 ຕື້ກວ່າກີບ, ໃນນີ້ ທຶນພາຍໃນ ຈຳນວນ 2.2 ລ້ານໂດລາສະຫະລັດ ແລະ ທຶນສາກົນ ຈຳນວນ 11 ລ້ານໂດລາສະຫະລັດ. ລາຍລະອຽດປະກອບມີ:

<u>ທຶນພາຍໃນ:</u>

- ສະໜອງງົບປະມານລາຍຈ່າຍຂອງກອງທຶນ ແລະ ໃຫ້ໂຄງການຍ່ອຍທີ່ຈັດຕັ້ງປະຕິບັດຢູ່ ຈຳນວນ 47 ໂຄງການ ລວມທັງໝົດ 16 ຕື້ກີບ ຫຼື 0.73 ລ້ານໂດລາສະຫະລັດ (ໃນນີ້, ລາຍຈ່າຍໃຫ້ໂຄງການຍ່ອຍ ຈຳນວນ 13.39 ຕື້ກວ່າກີບ);
- ສະໜອງງົບປະມານຕິດຕາມກວດກາສິ່ງແວດລ້ອມ ແລະ ຄຸ້ມຄອງອ່າງຮັບນ້ຳ ຈຳນວນ 21.8 ຕື້ກີບ ຫຼື 1 ລ້ານໂດລາສະຫະລັດ;

- ສະໜອງງົບປະມານວິຊາການ ວຽກງານປ່າໄມ້ ຈຳນວນ 10 ຕື້ກວ່າກີບ ຫຼື 0.46 ລ້ານໂດລາສະຫະລັດ ໂດຍ ປະສານສົມທົບກົມປ່າໄມ້, ພະແນກ ກະສິກຳ ແລະ ສິ່ງແວດລ້ອມ ແຂວງ ແລະ ຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມ ເມືອງ ຂອບເຂດທົ່ວປະເທດ ເພື່ອຊຸກຍູ້ປະຕິບັດລາຍຈ່າຍງົບປະມານ ໃນການຄຸ້ມຄອງ ປ່າໄມ້ ແລະ ເຄື່ອງປ່າຂອງດົງ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ;

ທຶນສາກົນ:

- ສະໜອງງົບປະມານໃນການຈັດຕັ້ງປະຕິບັດກິດຈະກຳໂຄງການ LLL ຈຳນວນ 1.8 ລ້ານໂດລາສະຫະລັດ ໃຫ້ກັບພາກສ່ວນກ່ຽວຂ້ອງ ພາຍໃຕ້ໂຄງການ ໃນອົງປະກອບ 3.2 ແລະ 3.3 ທັງ ໝົດ 9 ພາກສ່ວນ ເພື່ອປະຕິບັດກິດຈະກຳ ໃຫ້ບັນລຸຕາມແຜນການທີ່ກຳນົດໄວ້;
- ສະໜອງ ງົບປະມານໃຫ້ກັບ ບັນດາເຈົ້າຂອງໂຄງການ ແລະ ກອງທຶນບ້ານ ພາຍໃຕ້ໂຄງການSU-I-GFLM ຈຳນວນ 573 ໂຄງການ ລວມເປັນເງິນທັງໝົດ 6.6 ລ້ານໂດລາສະຫະລັດ;
- ສະໜອງ ງົບປະມານໃຫ້ກັບພາກສ່ວນກ່ຽວຂ້ອງ ພາຍໃຕ້ໂຄງການ ຢູ່ ສູນກາງ ແລະ 3 ແຂວງ ພາກໃຕ້ ລວມເປັນເງິນທັງໝົດ 1.2 ລ້ານໂດລາສະຫະລັດ;
- ສະໜອງ ງົບປະມານໃຫ້ກັບ ກົມກອງກ່ຽວຂ້ອງ ຈຳນວນ 4 ພາກສ່ວນ ແລະ ຫ້ອງການກອງທຶນ ໃນການຈັດຕັ້ງປະຕິບັດກິດຈະກຳ ພາຍໃຕ້ໂຄງການ PWMP ລວມເປັນເງິນທັງໝົດ 1.2 ລ້ານໂດລາສະຫະລັດ.

2) ປະສານສົມທົບກົມປ່າໄມ້, ພະແນກ ກະສິກຳ ແລະ ສິ່ງແວດລ້ອມ ແຂວງ ແລະ ຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມ ເມືອງ ຂອບເຂດທົ່ວປະເທດ ໃນການສ້າງແຜນເບີກຈ່າຍງົບປະມານ ທີ່ໄດ້ຮັບຈາກການປະຕິບັດພັນທະດ້ານປ່າໄມ້ ໃນການຫັນປ່ຽນທີ່ດິນປ່າໄມ້ ເຂົ້າໃນວຽກງານ ຟື້ນຟູປ່າ, ປູກປ່າທົດແທນ, ຟື້ນຟູຊີວະນາໆພັນ ແລະ ຟື້ນຟູລະບົບນິເວດປ່າໄມ້ ໃຫ້ບັນລຸຕາມຄາດໝາຍ ຂອງ ແຕ່ລະໂຄງ ການ ໃນ ແຕ່ລະປີ;
3) ສ້າງຄວາມເຂັ້ມແຂງ ໃຫ້ສູນກາງ ແລະ ທ້ອງຖິ່ນ ທີ່ໄດ້ຮັບການສະໜອງທຶນ ແລະ ມີແຜນເບີກຈ່າຍງົບປະມານຜ່ານກອງທຶນ ໃຫ້ມີຄວາມເຂົ້າໃຈໃນການຄຸ້ມຄອງການເງິນ, ການຂຶ້ນແຜນຄົດໄລ່ງົບປະມານ, ການປະກອບເອກະສານຂໍຖອນງົບປະມານ ແລະ ລະບຽບຂັ້ນຕອນ ການຈັດຊື້-ຈັດຈ້າງ ຢ່າງໜ່ອຍ 2 ຄັ້ງ ຕໍ່;
4) ປັບປຸງ ແລະ ພັດທະນາ ລະບົບການຄຸ້ມຄອງການເງິນ ແບບທັນສະໄໝ ເພື່ອເພີ່ມທະວີ ຄວາມສະດວກໃນ ການປະສານງານ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ແລະ ປັບປຸງ ລະບົບໂປແກຼມບັນຊີ ທຶນພາຍໃນ ແລະ ສາກົນ ພາຍໃນກອງທຶນ;
5) ແລກປ່ຽນບົດຮຽນ ໃນການປະຕິບັດກົນໄກການສະໜອງທຶນ ແລະ ການປະຕິບັດລາຍຈ່າຍ ທຶນພາຍໃນ ຂອງກອງທຶນ ຮ່ວມກັບຂະແໜງ ການເງິນ ຢູ່ຂັ້ນ ສູນກາງ ແລະ ທ້ອງຖິ່ນ ຢ່າງເປັນປົກກະຕິ ເພື່ອປັບປຸງ ແກ້ໄຂ ຂອດການເບີກຈ່າຍເງິນ ໃຫ້ມີຄວາມວ່ອງໄວຂຶ້ນກ່ອນເກົ່າ;

2.1.4 ດ້ານການກວດກາ, ຕິດຕາມ ແລະ ປະເມີນຜົນ ການນຳໃຊ້ທຶນ

1) ສ້າງຄະນະຮັບຜິດຊອບ ແລະ ຄະນະປະສານງານ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ໃນການຄຸ້ມຄອງ ການນຳໃຊ້ທຶນ ຈາກ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ທີ່ໄດ້ສະໜອງທຶນ ແລະ ເບີກຈ່າຍງົບປະມານ ເພື່ອເພີ່ມທະວີຂອດການປະສານງານລວມສູນ;
2) ປັບປຸງແບບຟອມບົດລາຍງານ ການຈັດຕັ້ງປະຕິບັດ ໂຄງການຍ່ອຍ ທີ່ນຳໃຊ້ທຶນພາຍໃນດ້ານສິ່ງແວດລ້ອມ, ບົດລາຍງານການຈັດຕັ້ງປະຕິບັດກິດຈະກຳ ຂອງງົບປະມານທີ່ໄດ້ຮັບການຈັດສັນແບ່ງປັນປະຈຳປີ,

ກອບຕິດຕາມປະເມີນຜົນຕາມຕົວຊີ້ວັດ ຜົນໄດ້ຮັບ ແລະ ຕົວຊີ້ວັດກິດຈະກຳ ໃນແຕ່ລະໄລຍະ ໃຫ້ມີ ຄວາມສະດວກ ແລະ ເຂົ້າໃຈງ່າຍ;

3) ສ້າງລະບົບຕິດຕາມໂຄງການຍ່ອຍທີ່ສາມາດເຊື່ອມກັບໂຄງການຍ່ອຍ ເພື່ອສະດວກໃນການຕິດຕາມ ການຈັດຕັ້ງປະຕິບັດໂຄງການຢູ່ທ້ອງຖິ່ນ;
4) ຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງ ໃຫ້ພະນັກງານພາຍໃນ ແລະ ຜູ້ຈັດຕັ້ງປະຕິບັດໂຄງການຍ່ອຍ ແລະ ຈັດຕັ້ງປະຕິບັດກິດຈະກຳ ທີ່ໄດ້ຮັບທຶນຈາກກອງທຶນ ໃຫ້ເຂົ້າໃຈ ກ່ຽວກັບຂັ້ນຕອນ ແລະ ວິທີການ ໃນການຕິດຕາມ ແລະ ປະເມີນຜົນ ໃນແຕ່ລະໄລຍະ ໃຫ້ໄດ້ 2 ຄັ້ງຕໍ່ປີ;
5) ແລກປ່ຽນບົດຮຽນ ພາຍໃນ ແລະ ຕ່າງປະເທດ ໃນການຈັດຕັ້ງປະຕິບັດວຽກງານ ກວດກາ, ຕິດຕາມ ແລະ ປະເມີນຜົນ ເພື່ອປັບປຸງແກ້ໄຂຂໍ້ຄົງຄ້າງ ໃນການປະຕິບັດວຽກງານຕົວຈິງໃນແຕ່ລະໄລຍະ ໃຫ້ໄດ້ 1 ຄັ້ງຕໍ່ປີ;
6) ລົງຊຸກຍູ້, ຕິດຕາມ ແລະ ສະໜັບສະໜຸນດ້ານວິຊາການ ການຈັດຕັ້ງປະຕິບັດໂຄງການຍ່ອຍ ແລະ ການ ນຳໃຊ້ທຶນ ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ຢ່າງໜ້ອຍ 2 ຄັ້ງຕໍ່ປີ ເພື່ອຮ່ວມແກ້ ໄຂບັນຫາຂໍ້ຄົງຄ້າງໃນແຕ່ລະໄລຍະ ໃຫ້ທັນກັບສະພາບການ;
7) ດຳເນີນຂະບວນການປະເມີນຜົນ ກ່ອນຈັດຕັ້ງປະຕິບັດໂຄງການຍ່ອຍ ແລະ ກ່ອນໄດ້ຮັບທຶນຈັດສັນ ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ເພື່ອເປັນຂໍ້ມູນພື້ນຖານເບື້ອງຕົ້ນ ໃນການປະເມີນຜົນ ກ່ອນ ແລະ ຫຼັງນຳໃຊ້ທຶນ;
8) ດຳເນີນຂະບວນການປະເມີນຜົນ ປະຈຳປີ, ກາງສະໄໝ ແລະ ໄລຍະປິດໂຄງການຍ່ອຍ ແລະ ການນຳໃຊ້ ທຶນ ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ໃຫ້ໄດ້ 1 ຄັ້ງຕໍ່ປີ ພ້ອມທັງສ້າງບົດລາຍງານ ຕິດຕາມ ແລະ ປະເມີນຜົນ ສະເພາະໂຄງການ ແລະ ອັນລວມ ປະຈຳປີ ຢ່າງເປັນປົກກະຕິ;
9) ປັບປຸງ ແລະ ພັດທະນາ ລະບົບຕິດຕາມ ແລະ ປະເມີນຜົນ ໃນການຈັດຕັ້ງປະຕິບັດ ກິດຈະກຳຕ່າງໆ ໃນ ການນຳໃຊ້ທຶນ ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ໃຫ້ເປັນລະບົບທັນສະໄໝ, ເພີ່ມ ທະວີ ຄວາມສະດວກໃນການບັນທຶກຂໍ້ມູນລາຍງານ ແລະ ເກັບຮັກສາຂໍ້ມູນໃນລະບົບທັນສະໄໝ;
10) ສັງລວມຜົນໄດ້ຮັບ ແລະ ຜະລິດຕະພັນ ທີ່ເກີດຂຶ້ນຈາກ ການສະໜອງທຶນ ແລະ ນຳໃຊ້ທຶນ ຂອງກອງທຶນ ປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ໃນແຕ່ລະປີ ເພື່ອໂຄສະນາ ເຜີຍແຜ່ຜົນງານ ແລະ ຜົນໄດ້ຮັບໃນ ການນຳໃຫ້ທຶນ ໃຫ້ສັງຄົມຮັບຮູ້ຢ່າງກວ້າງຂວາງ.

2.1.5 ດ້ານການຮ່ວມມື ແລະ ການຫັນເປັນຄູ່ຮ່ວມງານ

1) ສືບຕໍ່ເພີ່ມທະວີການຮ່ວມມື ແລະ ຫັນເປັນຄູ່ຮ່ວມງານ ກັບ ພາກສ່ວນຕ່າງໆ ໃຫ້ກວ້າງຂວາງ ເຊັ່ນ: ກະຊວງ ແລະ ກົມກອງກ່ຽວຂ້ອງ, ມະ ຫາວິທະຍາໄລແຫ່ງຊາດ ແລະ ປະຈຳພາກ, ອົງການຈັດຕັ້ງ ມະຫາຊົນ, ຊຸມຊົນທ້ອງຖິ່ນ ແລະ ສືບຕໍ່ເປັນຄູ່ຮ່ວມງານ ກັບອົງການຈັດຕັ້ງສາກົນຕ່າງໆໃຫ້ຍືນຍົງເຊັ່ນ: WB, UNDP, GIZ, UNEP, FAO ແລະ GGGI ແລະ ຄູ່ຮ່ວມພັດທະນາອື່ນ;
2) ແລກປ່ຽນບົດຮຽນກັບກອງທຶນສິ່ງແວດລ້ອມ ຂອງ ຫງວດນາມ ດ້ານວຽກງານການລະດົມທຶນ ເຊັ່ນກົນ ໄກການເກັບລາຍຮັບ ແລະ ການປະຕິບັດວຽກງານ PFES ພ້ອມທັງໃຫ້ມີສັນຍາຮ່ວມມື 2 ຝ່າຍ ເພື່ອ ເຮັດກິດຈະກຳຮ່ວມກັນ;
3) ຈັດກອງປະຊຸມແລກປ່ຽນ ກັບກອງທຶນສິ່ງແວດລ້ອມປະເທດໄທ ເພື່ອແລກປ່ຽນບົດຮຽນໃນການຄຸ້ມ ຄອງກອງທຶນ ແລະ ກົນໄກການລະດົມທຶນ ພ້ອມທັງການນຳໃຊ້ ທຶນ ສູ່ຂະແໜງການຕ່າງໆ ທີ່ກ່ຽວຂ້ອງ;
4) ພົວພັນ ປະສານງານກັບ ອົງການ GGGI ເພື່ອແລກປ່ຽນວຽກງານໃນການຄຸ້ມຄອງ ການເງິນດ້ານປ່າໄມ້ (Forest Finance);

5) ຮ່ວມມືກັບ ອົງການ FAO ແລະ ຫ້ອງການ GIZ ເພື່ອສືບຕໍ່ຈັດຕັ້ງປະຕິບັດກິດຈະກຳ ສ້າງຄວາມເຂັ້ມແຂງໃຫ້ ກອງທຶນ ໃນການເຂົ້າເປັນອົງກອນແຫ່ງຊາດເພື່ອເຂົ້າເຖິງແຫຼ່ງທຶນສາກົນ GCF ໄດ້ໂດຍ ກົງ (DAE);
6) ຮ່ວມມືກັບ ສະຫະພາບເອີຣົບປະຈຳລາວ ໃນການກະກຽມໂຄງການເຊື່ອມຕໍ່ທຶນເຂົ້າໃນການຈັດຕັ້ງ ປະຕິບັດກິດຈະກຳ ພາຍໃຕ້ໂຄງການ SU-I-GFLM ຊຶ່ງໄດ້ອ້ອຍທຶນມາຈາກໂຄງການ TiCAP/ProFEB ;
7) ປະສານສົມທົບກັບ ຊ່ຽວຊານ ທະນາຄານໂລກ ໃນການຈັດຕັ້ງປະຕິບັດກິດຈະກຳ ໂຄງການຄຸ້ມຄອງມົນ ລະພິດ ແລະ ສິ່ງເສດເຫຼືອ (PWMP) ພາຍໃຕ້ອົງປະກອບ 1 ແລະ 3 ພ້ອມທັງປະສານງານກັບ ກົມເຄຫາ ແລະ ຜັງເມືອງ ກະຊວງໂຍທາທິການ ແລະ ຂົນສົ່ງ ໃນນາມເປັນພາກສ່ວນຈັດຕັ້ງປະຕິບັດຫລັກ ເພື່ອ ສະຫລຸບລາຍງານການປະຕິບັດງົບປະມານ ໃນປີ 2026;
8) ເພີ່ມທະວີສາຍພົວພັນກັບ ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດ (GCF) ເພື່ອສ້າງຄວາມ ເຂັ້ມແຂງໃຫ້ກອງທຶນ ກາຍເປັນ ອົງກອນທີ່ສາມາດເຂົ້າຫາແຫຼ່ງທຶນໄດ້ ໂດຍກົງ ໂດຍໃຫ້ ສຳເລັດ ການ ເຊັນສັນຍາຮ່ວມມື 2 ຝ່າຍ (AMA);
9) ແລະ ປະຕິບັດການຮ່ວມມື ອື່ນອີກ ກັບ ບັນດາອົງການຈັດຕັ້ງສາກົນ ທີ່ກ່ຽວຂ້ອງ ເພື່ອພັດທະນາກົນໄກ ການລະດົມທຶນ ແລະ ສະໜອງທຶນ ຂອງ ກສປ ພ້ອມທັງ ພັດທະນາ ກສປ ໃນການຄຸ້ມຄອງ ທຶນສາກົນ ຢ່າງມີປະສິດຕິພາບ ແລະ ປະສິດຕິຜົນ ກ້າວສູ່ລະດັບສາກົນ.

2.1.6 ດ້ານການໂຄສະນາເຜີຍແຜ່ຂໍ້ມູນຂ່າວສານ

ຈັດຕັ້ງປະຕິບັດວຽກງານໂຄສະນາເຜີຍແຜ່ໂດຍຜົນຂະຫຍາຍ ແຜນການ 5 ປີ (2026-2030) ອອກມາເປັນ ແຜນວຽກລະອຽດ ຊຶ່ງຈະຕ້ອງໄດ້ສຸມໃສ່ປະຕິບັດວຽກຈຸດສຸມດັ່ງນີ້:

1) ສືບຕໍ່ເຮັດວຽກຮ່ວມກັບພາກສ່ວນກ່ຽວຂ້ອງ ເພື່ອສ້າງແຜນການໂຄສະນາເຜີຍແຜ່ 2026 ໃຫ້ເປັນຮ່າງ ສະບັບສົມບູນ ກ່ອນສະເໜີຕົດຕັ້ງປະຕິບັດ;
2) ຈັດກອງປະຊຸມຜູ້ມີສ່ວນຮ່ວມ ເພື່ອເຜີຍແຜ່ຜົນງານ ແລະ ແລກປ່ຽນບົດຮຽນກັບ ພາກສ່ວນທີ່ກ່ຽວ ຂ້ອງ ໂດຍສະເພາະພາກສ່ວນທີ່ໄດ້ຮັບທຶນຈາກ ກສປ;
3) ປັບປຸງ, ສ້າງ ແລະ ຈັດພິມສື່ສິ່ງພິມຕ່າງໆເຊັ່ນ: ແຜ່ນພັບ, ປະຕິທິນ, ວາລະສານ ຫຼື ລົງໂຄສະນາຜ່ານສື່ ອື່ນໆ ຊຶ່ງລວມເອົາຜົນງານການເຄື່ອນໄຫວຂອງ ກປສ ແລະ ໂຄງການຕ່າງໆທີ່ໄດຮັບທຶນຈາກ ກສປ ເພື່ອເຜີຍແຜ່ຜົນງານ ແລະ ຂໍ້ມູນຂ່າວສານກ່ຽວກັບການປົກປັກຮັກສາສິ່ງແວດລ້ອມແລະ ປ່າໄມ້;
4) ປັບປຸງ ແລະ ພັດທະນາ ລະບົບຖານຂໍ້ມູນຂ່າວສານຂອງ ກອງທຶນ ລວມທັງ ເວບໄຊສ ເພື່ອໃຫ້ຂໍ້ມູນ ໄດ້ຮັບການອັບເດດ ແລະ ອອກສູ່ສັງຄົມ ຢ່າງເປັນປົກກະຕິ;
1) ເຜີຍແຜ່ນະໂຍບາຍ, ຍຸດທະສາດ, ລະບຽບການຄຸ້ມຄອງ, ຄູ່ມືຕ່າງໆ, ແຈກຢາຍ, ວາງສະແດງ ແລະ ຝຶກ ອົບຮົມ.

ພາກທີ III ມາດຕະການຈັດຕັ້ງປະຕິບັດ

ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນການ ໃນປີ 2026 ຂອງ ຫ້ອງການກອງທຶນປົກປັກຮັກສາ ສິ່ງແວດລ້ອມ ແລະ ປ່າໄມ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນນັ້ນ ຕ້ອງໄດ້ສືບຕໍ່ຈັດຕັ້ງປະຕິບັດມາດຕະການ ດັ່ງນີ້:

1. ຄະນະຫ້ອງການ, ຄະນະຂະແໜງ ແລະ ພະນັກງານ ຕ້ອງເພີ່ມທະວີຄວາມຮັບຜິດ ຊອບໜ້າທີ່ການເມືອງ ຂອງຕົນໃຫ້ສູງຂຶ້ນ, ກ້າຄິດ, ກ້າທຳ, ກ້າຮັບຜິດຊອບ, ຮູ້ເສີມຂະຫຍາຍຈຸດດີ, ປັບປຸງແກ້ໄຂຈຸດອ່ອນ ໂດຍໃຫ້ມີການຫັນປ່ຽນທີ່ດີຂຶ້ນກວ່າເກົ່າ;
2. ຄະນະຫ້ອງການ ແລະ ຄະນະຂະແໜງ ຕ້ອງເປັນເຈົ້າການຜັນຂະຫຍາຍ ຄາດໝາຍສູ້ຊົນ, ໜ້າວຽກຈຸດສຸມ ໃຫ້ເປັນແຜນວຽກລະອຽດ, ມີການແບ່ງວຽກຢ່າງເດັດຂາດ, ມີການຊຸກຍູ້, ຕິດຕາມ, ກວດກາ ຖອດຖອນບົດຮຽນ ເພື່ອປັບປຸງ ແກ້ໄຂ ບັນຫາ ໃນການຈັດຕັ້ງປະຕິບັດໃນແຕ່ລະໄລຍະ;
3. ປັບປຸງຄູ່ມືຕ່າງໆທີ່ເປັນເງື່ອນໄຂ ຂອງສາກົນ ໃນການກາຍເປັນອົງກອນທີ່ສາມາດເຂົ້າເຖິງແຫຼ່ງທຶນສາກົນ ແລະ ບັນດາແບບຟອມການຂໍທຶນໂຄງການ ທຶນພາຍໃນ ໃຫ້ສອດຄ່ອງກັບການຈັດຕັ້ງປະຕິບັດຕົວຈິງ;
4. ປະສານສົມທົບຢ່າງໃກ້ຊິດ ກັບບັນດາໂຄງການຍ່ອຍ ໃນການຈັດຕັ້ງປະຕິບັດກິດຈະກຳຂອງໂຄງການ ໃຫ້ໄດ້ຕາມແຜນ; ໃຫ້ຄຳແນະນຳໃນການແກ້ໄຂບັນຫາເປັນແຕ່ລະກໍລະນີ ພ້ອມທັງຕິດຕາມ ແລະ ຊຸກຍູ້ການສະສາງ ແລະ ສະໜູບລາຍຈ່າຍງົບປະມານ ໃຫ້ຖືກຕ້ອງສອດຄ່ອງກັບລະບຽບການ ແລະ ທັນຕາມກຳນົດເວລາ ເພື່ອສາມາດຄ່ຽນເງິນໃໝ່ໄດ້ຕາມແຜນການ;
5. ເພີ່ມທະວີການປະສານສົມທົບກັບກົມກອງກ່ຽວຂ້ອງ ແລະ ບັນດາໂຄງການຜັດ ທະນາຂະແໜງໄຟຟ້າ ແລະ ບໍ່ແຮ່ ໃນການແຈ້ງທອງການປະກອບສ່ວນຜັນທະດ້ານສິ່ງແວດລ້ອມ. ພ້ອມທັງຕິດຕາມ ແລະ ຊຸກຍູ້ ບັນດາໂຄງການເງິນກູ້ ເພື່ອໃຫ້ຊຳລະຕົ້ນທຶນ ແລະ ດອກເບ້ຍ ໃຫ້ໄດ້ຕາມແຜນການ;
6. ເຜີຍແຜ່, ເຊື່ອມຊຶມ ໃຫ້ພະນັກງານ ມີຄວາມເຂົ້າໃຈ ກ່ຽວກັບວຽກງານ ຂອງຕົນ ແລະ ສ້າງເງື່ອນໄຂ ໃນຍົກລະດັບສະເພາະດ້ານວິຊາການ, ຄັດເລືອກ ແລະ ຊັບຊ້ອນ ຜູ້ທີ່ມີຄວາມຮູ້, ຄວາມສາມາດ, ມີປະສົບການ ໃຫ້ສອດຄ່ອງ ກັບຫຼັກວິຊາສະເພາະ ຕາມກຳນົດຕຳແໜ່ງງານ;
7. ສືບຕໍ່ການໂຄສະນາເຜີຍແຜ່ ຜົນການຈັດຕັ້ງປະຕິບັດວຽກງານຂອງ ກປສ ແລະ ວຽກງານປົກປັກຮັກສາຊັບ ພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຜ່ານສື່ຕ່າງໆ ເຊັ່ນ: ເວັບໄຊສ, ເຟສບຸກ, ວາລະສານ, ໜັງສືພິມ, ວິທະຍຸ, ໂທລະພາບ ໃຫ້ເປັນປົກກະຕິ ແລະ ຕໍ່ເນື່ອງ.

ຫົວໜ້າຫ້ອງການກອງທຶນ

ພັດນະຄອນ ຄັນທະນີໄຊ

ຕາຕະລາງ 7: ຄາດຄະເນລາຍຮັບຈາກແຫຼ່ງຕ່າງໆ ປີ 2026

ລ/ດ	ແຫຼ່ງລາຍຮັບຕົ້ນຕໍ	ແຜນລາຍຮັບ ປີ 2026	
		ກີບ (21,703)	ໂດລາ ສຫລ
I	**ທຶນພາຍໃນ**	**204,661,817,748**	**9,430,116**
	ບ້ອງສິ່ງແວດລ້ອມ: (1+2+3+4)	**-**	**3,845,690.20**
1	**ດອກເບ້ຍຕົ້ນທຶນເງິນຝາກປະຈຳ**	**14,445,950,860**	**665,620**
2	**ໂຄງການເງິນປ່ອຍກູ້**	**704,048,141**	**32,440**
2.1	ດອກເບ້ຍຈາກໂຄງການເງິນປ່ອຍກູ້	-	0
2.2	ຕົ້ນທຶນໂຄງການເງິນກູ້	704,048,141	32,440
3	**ທຶນປະກອບສ່ວນຜັນທະສິ່ງແວດລ້ອມ**	**68,313,015,409**	**3,147,630**
3.1	ທຶນປະກອບສ່ວນຈາກໂຄງການບໍ່ແຮ່	48,296,403,618	2,225,333
3.2	ທຶນປະກອບສ່ວນຈາກໂຄງການໄຟຟ້າ	19,706,324,000	908,000
3.3	ທຶນປະກອບສ່ວນຈາກໂຄງການພື້ນຖານໂຄງລ່າງ ແລະ ກະສິກຳ ແລະ ປ່າໄມ້	310,287,791	14,297
4	**ຄ່າປັບໃໝ ແລະ ຄ່າທົດແທນຄວາມເສຍຫາຍຕໍ່ສິ່ງແວດລ້ອມ**	-	-
5	**ລາຍຮັບຈາກປ່າໄມ້**	**27,683,884,092**	**1,275,578.68**
5.1	ການຂາຍໄມ້ ແລະ ເຄື່ອງປ່າຂອງດົງ	10,321,484,092	475,578.68
5.2	ລາຍຮັບຈາກໂຄງການລົງທຶນຕາມມະຕິຄະນະປະຈຳສະພາແຫ່ງຊາດ	17,362,400,000	800,000
6	**ງົບຄຸ້ມຄອງງົບປະມານຕິດຕາມກວດກາວິຊາການ ດ້ານສິ່ງແວດລ້ອມ ແລະ ການຄຸ້ມຄອງອ່າງຮັບນ້ຳ**	93,514,919,246	**4,308,847.59**
6.1	ງົບປະມານຕິດຕາມກວດກາວິຊາການ ດ້ານສິ່ງແວດລ້ອມ	90,427,667,496	4,166,597.59
6.2	ງົບຄຸ້ມຄອງການຄຸ້ມຄອງອ່າງຮັບນ້ຳ	3,087,251,750	142,250
II	**ທຶນສາກົນ**	**239,200,050,730**	**11,021,520**
1	ທະນາຄານໂລກ-ໂຄງການ LLL	41,037,399,689	1,890,863
2	ອົງການ UNEP/GCF	26,333,986,140	1,213,380
3	ອົງການ GIZ/GCF (ໂຄງການ SU-I-GFLM)	144,001,620,876	6,635,102
4	ໂຄງການ PWMP	27,827,044,025	1,282,175
	ລວມຄາດຄະເນລາຍຮັບທຶນພາຍໃນ ແລະ ສາກົນ ທັງໝົດ (I+II)	**443,861,868,479**	**20,451,637**

ຕາຕະລາງ 8: ຄາດຄະເນລາຍຈ່າຍສະໜອງງົບປະມານກິດຈະກຳ ປີ 2026

ລ/ດ	ລາຍລະອຽດສະໜອງງົບປະມານ	ຈຳນວນໂຄງການທີ່ຈັດຕັ້ງປະຕິ ບັດໃນ ປີ 2026	ແຜນສະໜອງທຶນປີ 2026	
			ກີບ	ໂດລາ ສຫລ (21,703)
I	**ສະໜອງງົບປະມານໂຄງການຍ່ອຍ ຕາມ 8 ຮ່ວງທຶນ**	47	**13,399,499,950**	**617,403**
1	ຮ່ວງທຶນ ນະໂຍບາຍ ແລະ ການສ້າງຄວາມເຂັ້ມແຂງ ດ້ານສິ່ງແວດລ້ອມ;	8	2,348,529,000	108,212
2	ຮ່ວງທຶນ ອະນຸລັກຊີວະນາໆພັນ;	9	3,266,091,550	150,490
3	ຮ່ວງທຶນ ສິ່ງແວດລ້ອມ, ການຄວບຄຸມ ແລະ ແກ້ໄຂ ມົນລະພິດ;	17	3,614,710,300	166,553
4	ຮ່ວງທຶນ ການຄຸ້ມຄອງທີ່ດິນແບບຍືນຍົງ;	4	1,320,719,000	60,854
5	ຮ່ວງທຶນ ການຄຸ້ມຄອງຊັບພະຍາກອນນ້ຳແບບຍືນ ຍົງ;	6	1,713,655,100	78,959
6	ຮ່ວງທຶນ ການປ່ຽນແປງດິນຟ້າອາກາດ;	3	1,135,795,000	52,334
7	ຮ່ວງທຶນ ການຄຸ້ມຄອງ ລະບົບນິເວດ ແລະ ການ ພັດທະນາໂຄ່ງລາງພື້ນຖານຂະໜາດນ້ອຍ ໃນການ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ;	-	-	-
8	ຮ່ວງທຶນ ກະສິກຳສະອາດ ແລະ ເປັນມິດຕໍ່ ສິ່ງແວດລ້ອມ;	-	-	-
II.	**ສະໜອງທຶນຕິດຕາມກວດກາວິຊາການດ້ານ ສິ່ງແວດລ້ອມ ແລະ ຄຸ້ມຄອງອ່າງຮັບນ້ຳ**		**21,800,000,000**	**1,004,469**
1	ງົບຕິດຕາມກວດກາວິຊາການດ້ານສິ່ງແວດລ້ອມ ແລະ ຄຸ້ມຄອງອ່າງຮັບນ້ຳ	166 (18ແຂວງ/148 ເມືອງ)	21,300,000,000	981,431
2	ງົບປະມານຄຸ້ມຄອງອ່າງຮັບນ້ຳ	1	500,000,000	23,038
III.	**ສະໜອງງົບປະມານວິຊາການວຽກປ່າໄມ້**		**10,200,000,000**	**469,981**
1	ລາຍຈ່າຍວິຊາການບ້ວງເຄື່ອງປ່າຂອງດົງ	31 (13ສູນກາງ/18 ແຂວງ)	5,500,000,000	253,421
2	ລາຍຈ່າຍວິຊາການບ້ວງຟື້ນຟູປ່າ ແລະປຸກປ່າທົດແທນ ຕາມມະຕິຄະນະປະຈຳສະພາແຫ່ງຊາດ	6	4,700,000,000	216,560
IV.	**ລາຍຈ່າຍສະໜອງທຶນສາກົນ**		**239,200,050,730**	**11,021,520**
1	ທຶນທະນາຄານໂລກ ໂຄງການ LLL	9	41,037,399,689	1,890,863
2	ທຶນ GCF/GIZ (SU-I-GFLM)	573	144,001,620,876	6,635,102

3	ທຶນ UNEP/GCF	4	26,333,986,140	1,213,380
4	ທຶນທະນາຄານໂລກ ໂຄງການ PWMP	5	27,827,044,025	1,282,175
ລວມລາຍຈ່າຍສະໜອງທຶນສາກົນ			**284,599,550,680**	**13,113,374**

ຕາຕະລາງ 9: ຄາດຄະສະໜອງທຶນພາຍໃນ ໃຫ້ໂຄງການໃໝ່ ປີ 2026

ລ/ດ	ລາຍລະອຽດຮ່ວງທຶນ	ຈັດແບ່ງເປີເຊັນຕາມຮ່ວງທຶນ (ໂຄງການໃໝ່)	ແຜນສະໜອງທຶນ ປີ 2026	
			ກີບ	ໂດລາ ສຫລ (21,703)
1	ຮ່ວງທຶນ ນະໂຍບາຍ ແລະ ການສ້າງຄວາມເຂັ້ມແຂງດ້ານສິ່ງແວດລ້ອມ;	10%	3,000,000,000	138,230
2	ຮ່ວງທຶນ ອະນຸລັກຊີວະນາໆພັນ;	10%	3,000,000,000	138,230
3	ຮ່ວງທຶນ ສິ່ງແວດລ້ອມ, ການຄວບຄຸມ ແລະ ແກ້ໄຂມົນລະພິດ;	20%	6,000,000,000	276,459
4	ຮ່ວງທຶນ ການຄຸ້ມຄອງຊັບພະຍາກອນນ້ຳແບບຍືນຍົງ;	15%	4,500,000,000	207,345
5	ຮ່ວງທຶນ ການຄຸ້ມຄອງທີ່ດິນແບບຍືນຍົງ;	15%	4,500,000,000	207,345
6	ຮ່ວງທຶນ ການປ່ຽນແປງດິນຟ້າອາກາດ;	10%	3,000,000,000	138,230
7	ຮ່ວງທຶນ ການຄຸ້ມຄອງ ລະບົບນິເວດ ແລະ ການພັດທະນາໂຄ່ງລ່າງພື້ນຖານຂະໜາດນ້ອຍ ໃນການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ;	10%	3,000,000,000	138,230
8	ຮ່ວງທຶນ ກະສິກຳສະອາດ ແລະ ເປັນມິດຕໍ່ສິ່ງແວດລ້ອມ;	10%	3,000,000,000	138,230
ລວມ		100%	**30,000,000,000**	**1,382,297**

ຕາຕະລາງ 10: ຄາດຄະເນການລະດົມທຶນໃໝ່ ປີ 2026

ລ/ດ	ແຫ່ງລາຍຮັບຈາກການລະດົມທຶນໃໝ່	ຄາດຄະເຄແຜນລະດົມທຶນ ປີ 2026	
		ກີບ (21,703)	ໂດລາ ສຫລ
I	**ທຶນພາຍໃນ**	**189,417,639,831**	**8,732,055**
1	**ທຶນປະກອບສ່ວນພັນທະສິ່ງແວດລ້ອມ**	**68,313,013,890**	**3,147,630**
1.1	ພັນທະການປະກອບສ່ວນຂອງໂຄງການພັດທະນາ ໄຟຟ້າແລະບໍ່ແຮ່ ແລະ ອື່ນໆ	68,313,013,890	3,147,630

2	**ລະດົມທຶນເບື້ອງປ່າໄມ້**	**27,589,719,500**	**1,275,578**
2.1	ການຂາຍໄມ້ ແລະ ເຄື່ອງປ່າຂອງດົງ	10,227,319,500	475,578
2.2	ລາຍຮັບຈາກໂຄງການລົງທຶນຕາມມະຕິຄະນະປະຈຳສະພາແຫ່ງຊາດ	17,362,400,000	800,000
3	**ງົບຄຸ້ມຄອງງົບປະມານຕິດຕາມກວດກາວິຊາການ ດ້ານສິ່ງແວດລ້ອມ ແລະ ການຄຸ້ມຄອງອ່າງຮັບນ້ຳ**	**93,514,906,441**	**4,308,847**
3.1	ງົບປະມານຕິດຕາມກວດກາວິຊາການ ດ້ານສິ່ງແວດລ້ອມ ໂຄງການໃໝ່	90,427,654,691	4,166,597
3.2	ງົບຄຸ້ມຄອງການຄຸ້ມຄອງອ່າງຮັບນ້ຳ ໂຄງການໃໝ່	3,087,251,750	142,250
II	**ທຶນສາກົນ**	**56,040,944,025**	**2,582,175**
1	ໂຄງການ Profeb-EU	6,510,900,000	300,000
2	ໂຄງການ PWMP	27,827,044,025	1,282,175
3	ໂຄງການກະກຽມຄວາມພ້ອມ ແລະ ສ້າງຄວາມເຂັ້ມແຂງ ໃຫ້ ກສປ-GCF	21,703,000,000	1,000,000
ລວມທຶນພາຍໃນ ແລະ ສາກົນ ທັງໝົດ (I+III)		**245,458,583,856**	**11,314,230**